ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະມວນຄຳສັບເຕັກນິກວິຊາການກ່ຽວກັບຕະຫຼາດສິນເຊື່ອກາກບອນ

Glossary on Carbon Market

Australian Aid

GGGI

2025

ຄຳນຳ

ການປ່ຽນແປງດິນຟ້າອາກາດ ເປັນບັນຫາໃຫຍ່ໜຶ່ງທີ່ທ້າທາຍ ແລະ ສົ່ງຜົນກະທົບອັນໜັກໜ່ວງ ຕໍ່ທຸກຂົງເຂດ ແລະ ການພັດທະນາເສດຖະກິດ-ສັງຄົມ, ປະຈຸບັນຫຼາຍປະເທດໃນໂລກ ໄດ້ຖືເອົາບັນຫາການປ່ຽນແປງດິນຟ້າອາກາດ ເປັນບັນຫາສຳຄັນ ແລະ ດຳເນີນການແກ້ໄຂຢ່າງຈິງຈັງ. ສປປ ລາວ ກໍ່ໃຫ້ຄວາມສຳຄັນ ແລະ ໄດ້ມີຄວາມພະຍາຍາມສູງ ໃນການດຳເນີນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດທັງໃນລະດັບປະເທດ ແລະ ຮ່ວມກັບປະຊາຄົມໂລກ ໃນການແກ້ໄຂບັນຫາດັ່ງກ່າວໃນລະດັບສາກົນ, ສປປ ລາວ ໄດ້ໃຫ້ສັດຕະຍາບັນເຂົ້າເປັນພາຄີ ຂອງ ສົນທິສັນຍາ ສປຊ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ (UNFCCC) ໃນປີ 1995, ອານຸສັນຍາກຽວໂຕ ວ່າດ້ວຍ ການຄວບຄຸມການປ່ອຍທາດອາຍເຮືອນແກ້ວ (Kyoto Protocol) ໃນປີ 2003 ແລະ ສັນຍາປາຣີ ວ່າດ້ວຍ ການ ປ່ຽນແປງດິນຟ້າອາກາດ (Paris Agreement) ໃນປີ 2016 ພ້ອມນັ້ນ ກໍ່ໄດ້ເຂົ້າຮ່ວມເຄື່ອນໄຫວ ແລະ ປະກອບສ່ວນຢ່າງຕັ້ງໜ້າ ໃນການຈັດຕັ້ງປະຕິບັດພັນທະ ແລະ ຄວາມຮັບຜິດຊອບ ພາຍໃຕ້ຂອບການຮ່ວມມື ຂອງ ສົນທິ ສັນຍາສາກົນດັ່ງກ່າວ ຕາມເງື່ອນໄຂ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

ໄລຍະຜ່ານມາພວກເຮົາໄດ້ສຳເລັດການສ້າງເອກະສານສຳຄັນ ເປັນຕົ້ນ: ຍຸດທະສາດແຫ່ງຊາດການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ຮອດປີ 2030; ດຳລັດ ວ່າດ້ວຍການປ່ຽນແປງດິນຟ້າອາກາດ; ດຳລັດ ວ່າດ້ວຍ ສົນເຊື່ອການກ່ອນ; ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາການປ່ຽນ ແປງດິນຟ້າອາກາດ (NDC) ສະບັບທີສອງ ແລະ ກຳລັງປັບປຸງເປັນສະບັບທີສາມ. ພ້ອມດຽວກັນນີ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກຳລັງ ດຳເນີນການສ້າງຍຸດທະສາດການພັດທະນາທີ່ປ່ອຍທາດອາຍເຮືອນແກ້ວຕ່ຳ (Long-term Low Emission Development Strategy, LT-LEDS), ບົດລາຍງານ ກ່ຽວກັບ ການສຳຫຼວດການປ່ອຍທາດອາຍເຮືອນແກ້ວ ທີ່ ມີຄວາມໂປ່ງໃສ ສະບັບທຳອິດຂອງ ສປປ ລາວ (BTR) ແລະ ເອກະສານທີ່ສຳຄັນອື່ນໆ ອີກຈຳນວນໜຶ່ງ ຊຶ່ງທັງໝົດນີ້ ແມ່ນເອກະສານທາງດ້ານນະໂຍບາຍທີ່ສຳຄັນ ແລະ ເປັນພື້ນຖານໃຫ້ພາກສ່ວນຕ່າງໆ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ ດຳເນີນການຈັດຕັ້ງປະຕິບັດວຽກງານ ການປ່ຽນແປງດິນຟ້າອາກາດ ເພື່ອປະກອບສ່ວນໃນການຈັດຕັ້ງປະຕິບັດຄາດໝາຍສູ້ຊົນ ການຫຼຸດຜ່ອນການປ່ອຍ ແລະ ການດູດຊັບທາດອາຍເຮືອນແກ້ວ ໃຫ້ເປັນສູນ ໃນປີ 2050 ແນໃສ່ຮັບປະກັນໃຫ້ການພັດທະນາໄປຕາມທິດສີຂຽວ ແລະ ຍືນຍົງ, ທັງເປັນການປະກອບສ່ວນຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ຂອງ ອົງການ ສປຊ.

ການຊື້-ຂາຍສົນເຊື່ອການກ່ອນ ເປັນກົນໄກໜຶ່ງສຳຄັນ ເພື່ອສົ່ງເສີມການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ທີ່ເປັນສາເຫດຕົ້ນຕໍຂອງການປ່ຽນແປງດິນຟ້າອາກາດ ຊຶ່ງລັດຖະບານໄດ້ຮັບຮອງ ດຳລັດວ່າດ້ວຍສົນເຊື່ອການກ່ອນ ໂດຍໄດ້ກຳນົດຫຼັກການ ແລະ ຂັ້ນຕອນຕ່າງໆ ກ່ຽວກັບ ການພັດທະນາ ແລະ ການພິຈາລະນາໂຄງການສົນເຊື່ອການກ່ອນຢູ່ ສປປ ລາວ ໃຫ້ມີປະສິດທິພາບ, ໂປ່ງໃສ ແລະ ສອດຄ່ອງກັບລະບຽບການ ພ້ອມທັງເປັນການສົ່ງເສີມ ການພັດທະນາໂຄງການສົນເຊື່ອການກ່ອນ ແລະ ຕະຫຼາດສົນເຊື່ອການກ່ອນ ທັງພາຍໃນ ແລະ ສາກົນ. ນອກຈາກນີ້ ຍັງເປັນການຜັນຂະຫຍາຍເນື້ອໃນຈິດໃຈຂອງບັນດາ ສົນທິສັນຍາ ສປຊ ແລະ ອະນຸສັນຍາ ທີ່ໄດ້ກ່າວມາຂ້າງເທິງນັ້ນ ແລະ ສະໜັບສະໜຸນໃນການຈັດຕັ້ງປະຕິບັດ ບັນດາມາດຕະການໃນການຫຼຸດຜ່ອນທາດອາຍເຮືອນແກ້ວ ທີ່ໄດ້ກຳນົດເຂົ້າໃນຍຸດທະສາດແຫ່ງຊາດ ການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ຮອດປີ 2030, ແຜນງານ ແຫ່ງຊາດ NDC, ບົດສື່ສານແຫ່ງຊາດ, ບົດລາຍງານ BTR ແລະ ບົດລາຍງານອື່ນໆທີ່ກ່ຽວຂ້ອງ.

ຕະຫຼາດການກ່ອນໂລກ ໃນປະຈຸບັນແມ່ນໄດ້ກ້າວເຂົ້າສູ່ໄລຍະໃໝ່ ຊຶ່ງໃນປີ 2021 ໄດ້ມີການຮັບຮອງ ກົດ ລະບຽບ ພາຍໃຕ້ມາດຕາ 6 ຂອງສັນຍາປາຣີ ໃນກອງປະຊຸມ COP26, ໃນນັ້ນ ໄດ້ນຳສະເໜີ ຄຳແນະນຳທີ່ຊັດເຈນ ສຳລັບບັນດາປະເທດໃນການຮ່ວມມືກັນໃນການຊື້-ຂາຍສົນເຊື່ອການກ່ອນ, ການຖ່າຍໂອນຜົນໄດ້ຮັບ ຈາກການຫຼຸດຜ່ອນທາດອາຍເຮືອນແກ້ວລະຫວ່າງປະເທດ (ITMOs) ແລະ ກົນໄກພາຍໃຕ້ມາດຕາ 6.4 ຂອງສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ. ກົນໄກເຫຼົ່ານີ້ ແມ່ນຈະເປັນໂອກາດອັນສຳຄັນ ໃນການຍາດແຍ່ງ ແລະ ການ ດຶງດູດທາງດ້ານງົບປະມານ, ການສະໜັບສະໜຸນດ້ານວິຊາການ ແລະ ການຖ່າຍທອດເຕັກໂນໂລຊີ ຕິດພັນກັບການພັດທະນາການປ່ອຍທາດອາຍເຮືອນແກ້ວຕ່ຳ ແລະ ສົ່ງເສີມການພັດທະນາແບບຍືນຍົງ.

ເພື່ອໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວມີປະສິທິຜົນ. ສະນັ້ນ, ກົມສິ່ງແວດລ້ອມ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ (ກສ) ໄດ້ຮ່ວມມືກັບ ບັນດາອົງການຈັດຕັ້ງພາກລັດ, ຄູ່ຮ່ວມງານດ້ານການພັດທະນາ ແລະ ພາກເອກະຊົນ ເປັນຕົ້ນແມ່ນ ສະຖາບັນການເຕີບໂຕສີຂຽວສາກົນ (GGGI) ສ້າງປຶ້ມປະມວນຄຳສັບເຕັກນິກວິຊາການ ກ່ຽວກັບ ຕະຫຼາດ ສິນເຊື່ອກາກບອນ ສຳລັບ ສປປ ລາວ ໂດຍມີຈຸດປະສົງສຳຄັນຄື:

1) **ກຳນົດມາດຕະຖານຄຳສັບທາງດ້ານເຕັກນິກ:** ເພື່ອໃຫ້ການແປ ແລະ ການໃຊ້ນິຍາມຄຳສັບພາສາລາວສອດຄ່ອງກັນກັບແນວຄວາມຄິດຫຼັກຂອງຕະຫຼາດກາກບອນ ເພື່ອຮັບປະກັນຄວາມສອດຄ່ອງກັບມາດຕະຖານສາກົນ ແລະ ອຳນວຍຄວາມສະດວກໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ດຳລັດ ວ່າດ້ວຍ ສິນເຊື່ອກາກບອນ;
2) **ສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງ ແລະ ສ້າງຄວາມອາດສາມາດດ້ານວິຊາການ**: ເພື່ອເປັນເຄື່ອງມືຮັບໃຊ້ ແລະ ເປັນບ່ອນອີງສຳລັບຜູ້ວາງນະໂຍບາຍ, ການຄຸ້ມຄອງ, ຊ່ຽວຊານດ້ານເຕັກນິກ,ພາກເອກະຊົນ ແລະ ອົງການຈັດຕັ້ງທຸກພາກສ່ວນທາງສັງຄົມ;
3) **ເພີ່ມຄວາມໂປ່ງໃສ ແລະ ຄວາມໜ້າເຊື່ອຖື**: ສ້າງຄວາມເຊື່ອໝັ້ນແກ່ນັກລົງທຶນ ແລະ ຮັບປະກັນຄວາມສອດຄ່ອງທາງດ້ານເນື້ອໃນທີ່ປະກອບໃນເອກະສານສິ່ງແວດລ້ອມ ໃນການຫຼຸດການປ່ອຍທາດອາຍເຮືອນແກ້ວ ໂດຍການອະທິບາຍຊີ້ແຈງຄຳສັບດ້ານເຕັກນິກ;
4) **ສົ່ງເສີມການມີສ່ວນຮ່ວມຢ່າງກວ້າງຂວາງ**: ເຮັດໃຫ້ຊຸມຊົນ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນເອກະຊົນ ສາມາດມີສ່ວນຮ່ວມໃນການພັດທະນາຕະຫຼາດກາກບອນ ໂດຍສາມາດເຂົ້າໃຈ ແລະ ເຂົ້າເຖິງກອບແນວຄວາມຄິດທີ່ມີຄວາມສັບສົນດັ່ງກ່າວໄດ້ງ່າຍຂຶ້ນ.

ປຶ້ມປະມວນຄຳສັບເຕັກນິກວິຊາການ ສະບັບນີ້ ແມ່ນອີງປະກອບພື້ນຖານ ທີ່ໝາຍເຖິງຄວາມພະຍາຍາມ ຂອງ ສປປ ລາວ ເພື່ອຍົກລະດັບຄວາມເຂົ້າໃຈ, ການອະທິບາຍເນື້ອໃນ ຂອງຄຳສັບທາງດ້ານເຕັກນິກ ທີ່ເຫັນວ່າມີຄວາມເຂົ້າໃຈຍາກ, ສັບສົນ ແລະ ເພື່ອໃຫ້ສອດຄ່ອງຂອງກົດລະບຽບຕ່າງໆ, ພ້ອມທັງເປັນການສ້າງຄວາມສາມາດ ແລະ ການສື່ສານ ທີ່ຊັດເຈນລະຫວ່າງຜູ້ມີສ່ວນຮ່ວມທັງໝົດ.

ການສັງລວມຄຳສັບເຕັກນິກວິຊາການນີ້ ຄາດວ່າຈະເປັນປະໂຫຍດ ໃນການນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດ ວຽກງານດ້ານການປ່ຽນແປງດິນຟ້າອາກາດ ໂດຍສະເພາະ ວຽກງານສິນເຊື່ອກາກບອນ ຢ່າງມີປະສິດທິຜົນຂອງທຸກພາກສ່ວນໃນສັງຄົມ. ປຶ້ມປະມວນຄຳສັບເຕັກນິກວິຊາການສະບັບນີ້ ບໍ່ປັດສະຈາກໄດ້ຂໍ້ຂາດຕົກບົກຜ່ອງ ແຕ່ພວກເຮົາຫວັງຢ່າງຍິ່ງວ່າ ພາຍຫຼັງຖືກນຳໃຊ້ແລ້ວຈະໄດ້ຮັບຄຳຄິດເຫັນຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອທີ່ຈະສືບຕໍ່ປັບປຸງ ໃຫ້ສອດຄ່ອງກັບສະພາບຕົວຈິງ ແລະ ຄົບຖ້ວນສົມບູນຂຶ້ນເປັນແຕ່ລະໄລຍະໃນຕໍ່ໜ້າ.

ຕາງໜ້າໃຫ້ແກ່ກົມສິ່ງແວດລ້ອມ, ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງ ຕໍ່ການນຳ ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ທີ່ໄດ້ຊີ້ນຳ-ນຳພາຢ່າງໃກ້ຊິດ, ສະແດງຄວາມຂອບໃຈຕໍ່ບັນດາກົມ, ກອງ, ສະຖາບັນ ພາຍໃນ ກສ, ຂະແໜງການກ່ຽວຂ້ອງເປັນຕົ້ນ: ກະຊວງ ໂຍທາທິການ ແລະ ຂົນສົ່ງ, ກະຊວງ ອຸດສາຫະກຳ ແລະ ການຄ້າ, ກະຊວງ ສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ ແລະ ຄູ່ຮ່ວມພັດທະນາເປັນຕົ້ນ: ລັດຖະບານອິດສະຕາລີ ແລະ ສະຖາບັນເຕີບໂຕສີຂຽວສາກົນ (GGGI) ທີ່ໄດ້ມີການສັງລວມຄຳສັບເຕັກນິກ ວິຊາການ ທີ່ ຄາດວ່າຈະເປັນປະໂຫຍດ ແລະ ໄດ້ມີການສັງລວມ, ຕີຄວາມໝາຍ ແລະ ຈັດພິມອອກ ເພື່ອຈະໄປນຳໃຊ້ເຂົ້າໃນການຈັດຕັ້ງປະຕິດບັດ ວຽກງານການປ່ຽນແປງດິນຟ້າອາກາດ ຂອງທຸກພາກສ່ວນໃນສັງຄົມ. ເອກະສານປະມວນຄຳສັບ ເຕັກນິກວິຊາການນີ້ ປັດສະຈາກບໍ່ໄດ້ທີ່ຈະ ຂາດຕົກບົກຜ່ອງ ແຕ່ພວກເຮົາຫວັງຢ່າງຍິ່ງວ່າ ພາຍຫຼັງໄດ້ຖືກນຳໃຊ້ແລ້ວ ຈະໄດ້ຮັບຄຳຄິດເຫັນ ທີ່ເປັນປະໂຫຍດກັບຄືນມາ ແລະ ພວກເຮົາຍິນດີພ້ອມທີ່ຈະປັບປຸງໃຫ້ສອດຄ່ອງກັບສະພາບຕົວຈິງ ແລະ ສົມບູນຍິ່ງຂຶ້ນເປັນແຕ່ລະໄລຍະ ໃນຕໍ່ໜ້າ.

ນະຄອນຫຼວງວຽງຈັນ, ວັນທີ 07 ພະຈິກ 2025
ຫົວໜ້າກົມສິ່ງແວດລ້ອມ

ບ. ພັກທາວັນ ພິດສະໄໝ

FOREWORD

Climate change has become one of the most pressing challenges, affecting all sectors and socio-economic development. Many countries around the world recognize climate change as a critical issue and are taking actions to address it. Lao PDR likewise places strong emphasis on this issue and continues to intensify its national efforts to tackle climate change domestically, while also actively engaging in international cooperation to overcome this global challenge. Lao PDR acceded to the United Nations Framework Convention on Climate Change (UNFCCC) in 1995, and subsequently ratified the Kyoto Protocol in 2003 and the Paris Agreement in 2016. Furthermore, the country has since put its efforts and contributed proactively to fulfilling the obligations and responsibilities set out under the cooperative frameworks under the agreements, in accordance with its conditions and scope of responsibilities.

In recent years, Lao PDR has developed key national instruments, including the National Strategy on Climate Change towards 2030; Decree on Climate Change; Decree on Carbon Credits; the Second Nationally Determined Contribution (NDC) and the Third NDC, currently under formulation. In parallel, the Ministry of Agriculture and Environment is preparing the Long-term Low Emission Development Strategy (LT-LEDS), the first Biennial Transparency Report (BTR) of Lao PDR and other essential policy documents. These instruments are significant policies and serve as foundational frameworks to guide climate actions across sectors at the central and grassroots levels. They aim to achieve the national net-zero greenhouse gas (GHG) emissions target by 2050, and ensure green and sustainable development, contributing to the achievement of the UN Sustainable Development Goals (SDGs).

Carbon trading constitutes a vital mechanism to reduce GHG emissions which is a root cause of climate change. This led the Government to adopt the Decree on Carbon Credits, which outlines the principles and procedures for developing and authorizing carbon projects in Lao PDR, ensuring that these projects are effective, transparent and in compliance with national laws and regulations. This initiative also promotes the development of carbon projects and supports both domestic and international carbon markets. Moreover, it translates the above UN conventions and protocols into domestic legal frameworks and supports the implementation of GHG mitigation measures outlined in the National Strategy on Climate Change

towards 2030, NDCs, National Communications, BTR and other related reports. Global carbon markets have now entered a new phase. In 2021, Article 6 of the Paris Agreement was adopted at COP26. This provision provided clear guidance for countries to cooperate on carbon trading, including Internationally Transferred Mitigation Outcomes (ITMOs) and mechanisms under Article 6.4 of the Paris Agreement. These mechanisms offer important opportunities to mobilize financial resources, technical assistance and low-emission technology transfer, while promoting sustainable development.

To ensure effective implementation, the Department of Environment, Ministry of Agriculture and Environment has worked closely with other state agencies, development partners and the private sector, particularly Global Green Growth Institute (GGGI) to develop the Glossary for Carbon Markets in Lao PDR. Its objectives are to:

1. **Define technical terms:** Provide accurate translation and standardized Lao definitions consistent with the key concepts of carbon markets, ensuring alignment with international standards and facilitating the development and implementation of the Decree in Carbon Credits;
2. **Strengthen institutional and technical capacities:** Serve as a tool and reference for policymakers, administrators, technical experts, private sector and civil society organizations;
3. **Promote transparency and reliability:** Build investor confidence and support coherence across environmental instruments for GHG emission reduction by providing clear explanations of technical terminology;
4. **Promote inclusion:** Enable communities, local administrations and the private sector to engage effectively in carbon market development by simplifying complex concepts and frameworks for broader accessibility.

This glossary is an important component of Lao PDR's efforts to improve understanding of technical terms that are often difficult to interpret and complex. It supports alignment with national regulations, capacity building and clear coordination among all stakeholders.

We hope this compilation of technical terms will be useful for the effective implementation of climate actions, especially in the development and implementation of carbon credit activities by all stakeholders. While this glossary This glossary is an

important component of Lao PDR's efforts to improve understanding of technical terms that are often difficult to interpret and complex. It supports alignment with national regulations, capacity building and clear coordination among all stakeholders.

We hope this compilation of technical terms will be useful for the effective implementation of climate actions, especially in the development and implementation of carbon credit activities by all stakeholders. While this glossary may have shortcomings, we welcome feedback from relevant stakeholders so we can continuously improve this tool, ensuring it remains relevant to reality and comprehensive for future use.

On behalf of the Department of Environment, I would like to express my sincere gratitude to the Ministry of Agriculture and Environment for its leadership and guidance; to other departments and institutes within the Ministry; and related sectors, particularly the Ministry of Public Works and Transport, the Ministry of Industry and Commerce, the Ministry of Education and Sports, the Ministry of Public Health; and to development partners, especially The Australian Government, Department of Foreign Affairs and Trade (DFAT) and the Global Green Growth Institute (GGGI), for their contribution in compiling and defining all the technical terms and for supporting the publication of this glossary for use by all stakeholders in implementing climate actions. Although the glossary is not perfect, we look forward to receiving constructive feedback from relevant stakeholders, and we stand ready to improve this tool to ensure it remains relevant to reality and comprehensive for future use.

Vientiane Capital, 7 November 2025
Director General of Environment Department

CONTENTS - ສາລະບານ

A

Abatement cost/marginal abatement cost: ຕົ້ນທຶນໃນການຫຼຸດຜ່ອນທາດອາຍເຮືອນແກ້ວ....2

Acquiring country: ປະເທດທີ່ຊື້ສິນເຊື່ອກາກບອນ....2

Additionality: ຄວາມຕ້ອງການ ການຊ່ວຍເຫຼືອເພີ່ມເຕີມ....3

Ambition: ການເພີ່ມຄວາມພະຍາຍາມ....4

Approval: ການຮັບຮອງ....5

Article 6 of the Paris Agreement: ມາດຕາ 6 ຂອງສັນຍາປາຣີ ວ່າດ້ວຍການປ່ຽນແປງດິນຟ້າອາກາດ....6

Article 6, paragraph 2 of the Paris Agreement: ມາດຕາ 6.2 ຂອງສັນຍາປາຣີ....6

Article 6, paragraph 4 of the Paris Agreement: ມາດຕາ 6.4 ຂອງສັນຍາປາຣີ....7

Article 6, paragraph 8 of the Paris Agreement: ມາດຕາ 6.8 ຂອງສັນຍາປາຣີ....8

Article 6 Database: ຖານຂໍ້ມູນອອນລາຍພາຍໃຕ້ ມາດຕາ 6 ຂອງສັນຍາປາຣີ....8

Article 6.4 Mechanism: ກົນໄກການລົງທະບຽນ ມາດຕາ 6.4 ຂອງສັນຍາປາຣີ....9

Attribution: ການລະບຸແຫຼ່ງທີ່ມາ....9

Authorization: ການອະນຸມັດ....10

Avoidance: ການຫຼີກລ່ຽງ....10

B

Benefit Sharing: ການແບ່ງປັນຜົນປະໂຫຍດ....13

Biennial Transparency Report (BTR): ບົດລາຍງານຄວາມໂປ່ງໃສ ທຸກສອງປີ (BTR)....13

C

Carbon credit: ສິນເຊື່ອກາກບອນ....15

Carbon finance: ການເງິນກາກບອນ....15

Carbon market: ຕະຫຼາດກາກບອນ....16

Carbon Offsetting and Reduction Scheme for International Aviation (CORSIA): ໂຄງການ

ການຊົດເຊີຍ ແລະ ການຫຼຸດຜ່ອນ ການປ່ອຍ ສຳລັບ ການບິນສາກົນ 17

Carbon tax: ພາສີການປ່ອຍ 18

Carbon price: ລາຄາການປ່ອຍ 18

Centralized Accounting and Reporting Platform (CARP): ຖານຂໍ້ມູນ ການຄິດໄລ່ ແລະ ການລາຍງານແບບລວມສູນ 18

Clean Development Mechanism: ກົນໄກການພັດທະນາສະອາດ 19

Compliance Market: ຕະຫຼາດການປ່ອຍແບບບັງຄັບ 19

Conference of the Parties (COP): ກອງປະຊຸມລັດພາຄີສົນທິສັນຍາສະຫະປະຊາຊາດ ວ່າດ້ວຍການປ່ຽນແປງດິນຟ້າອາກາດ 20

Conference of the Parties serving as the meeting of the Parties to the Paris Agreement (CMA): ກອງປະຊຸມລັດພາຄີ ຄະນະກຳມະການສັນຍາປາຣີວ່າດ້ວຍການປ່ຽນແປງດິນຟ້າອາກາດ 21

Corresponding adjustment: ການປັບບັນຊີໃຫ້ສອດຄ່ອງກັນ 22

Crediting baseline: ເສັ້ນທຽບຖານຂອງການໃຫ້ສິນເຊື່ອ 23

Credit Cancellation: ການຍົກເລີກສິນເຊື່ອການປ່ອຍ 23

Carbon crediting mechanism: ກົນໄກການໃຫ້ສິນເຊື່ອການປ່ອຍ 24

Crediting period: ໄລຍະການໃຫ້ສິນເຊື່ອ 24

D

Double counting: ການນັບຊ້ຳຊ້ອນກັນ 26

E

Emissions balance: ດຸນການປ່ອຍທາດອາຍເຮືອນແກ້ວ 28

Emission trading system (ETS): ລະບົບການຊື້-ຂາຍ ທາດອາຍເຮືອນແກ້ວ 28

Enhanced Transparency Framework (ETF): ກອບແຜນງານ ຄວາມໂປ່ງໃສ (ETF) 29

Environmental integrity: ຄວາມໝັ້ນຄົງດ້ານສິ່ງແວດລ້ອມ 29

F

First transfer: ການຖ່າຍໂອນຄັ້ງທຳອິດ 32

Framework agreement: ກອບສັນຍາ 32

G

Gold Standard: ໂຄງສະແຕນດາດ 34

Greenhouse Gas: ທາດອາຍເຮືອນແກ້ວ 34

I

Integrity Council for the Voluntary Carbon Market (ICVCM): ໜ່ວຍງານກວດສອບຄວາມໂປ່ງໃສຂອງຕະຫຼາດການຄ້າບອນແບບສະໝັກໃຈ (ICVCM) 36

International Registry: ການລົງທະບຽນສາກົນ 36

Internationally transferred mitigation outcome (ITMO): ຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍເຮືອນແກ້ວທີ່ຖ່າຍໂອນລະຫວ່າງປະເທດ 37

Issuance: ການອອກສິນເຊື່ອການຄ້າບອນ 37

J

Joint Crediting Mechanism: ກົນໄກການຮ່ວມມືສອງຝ່າຍໃນການຫຼຸດຜ່ອນທາດອາຍເຮືອນແກ້ວ 39

L

Labels: ການໝາຍ (ຂອງສິນເຊື່ອການຄ້າບອນ) 41

M

Measurement, Reporting and Verification (MRV): ການວັດແທກ, ການລາຍງານ ແລະ ການຢັ້ງຢືນ 43

Methodology: ວິທີການ 43

Mitigation activity: ກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວ 44

Mitigation Activity Idea Note (MAIN) & Mitigation Activity Design Documents (MADD): ເອກະສານກອບແນວຄິດກ່ຽວກັບກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວ ແລະ ເອກະສານອອກແບບໂຄງການລະອຽດ ກ່ຽວກັບກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວ 45

Mitigation Contribution Unit (Article 6.4 MCU): ຫົວໜ່ວຍການປະກອບສ່ວນຫຼຸດຜ່ອນທາດອາຍເຮືອນແກ້ວ ພາຍໃຕ້ມາດຕາ 6 ຂອງສັນຍາປາຣີ 46

Mitigation Outcome (MO): ຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍເຮືອນແກ້ວ 46

Mitigation Outcome Purchase Agreement (MOPA): ສັນຍາວ່າດ້ວຍ ການຊື້-ຂາຍຜົນໄດ້ຮັບຈາກ ການຫຼຸດຜ່ອນທາດອາຍເຮືອນແກ້ວ 47

N

Nationally Determined Contribution (NDC): ແຜນງານແຫ່ງຊາດການປະກອບສ່ວນແກ້ໄຂບັນຫາ ການປ່ຽນແປງດິນຟ້າອາກາດ 49

Nationally Determined Contribution (NDC) Unconditional Mitigation Targets: ເປົ້າໝາຍ ການຫຼຸດຜ່ອນແບບບໍ່ມີເງື່ອນໄຂ 49

Nationally Determined Contribution (NDC) Conditional Mitigation Targets: ເປົ້າໝາຍການ ຫຼຸດຜ່ອນແບບມີເງື່ອນໄຂ 50

National Inventory Report (NIR): ບົດລາຍງານການສຳຫຼວດທາດອາຍເຮືອນແກ້ວແຫ່ງຊາດ (NIR) 50

Negative list: ລາຍການທີ່ບໍ່ໄດ້ຮັບອະນຸຍາດ 51

Net Zero Emissions: ການປ່ອຍທາດອາຍເຮືອນແກ້ວເປັນສູນ 51

Non-permanence: ການບໍ່ບັນລຸຕາມຄາດໝາຍ 52

O

Other International Mitigation Purposes (OIMP): ການຫຼຸດຜ່ອນທາດອາຍເຮືອນແກ້ວລະຫວ່າງ ປະເທດໃນຈຸດປະສົງອື່ນ 54

Overall Mitigation in Global Emissions (OMGE): ການຫຼຸດຜ່ອນທາດອາຍເຮືອນແກ້ວຂອງສາກົນ 54

Overselling risk: ຄວາມສ່ຽງໃນການຂາຍສິນເຊື່ອກາກບອນເກີນກຳນົດ 55

P

Paris agreement: ສັນຍາປາຣີ 57

Positive list: ລາຍການທີ່ໄດ້ຮັບອະນຸຍາດ 57

Project Owner: ເຈົ້າຂອງໂຄງການ 57

R

REDD+: ການຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຈາກການ ທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າເຊື່ອມໂຊມ60

Registry: ການຂຶ້ນທະບຽນ 60

Removal: ການເກັບກັກ 61

Reporting: ການລາຍງານທົ່ວໄປ 61

Reporting: Article 6 Initial Report: ການລາຍງານ: ບົດລາຍງານເບື້ອງຕົ້ນພາຍໃຕ້ມາດຕາ 6 ຂອງ ສັນຍາປາຣີ 62

Reporting: Article 6 Annual Information: ການລາຍງານ: ບົດລາຍງານປະຈຳປີ ພາຍໃຕ້ມາດຕາ 6 ຂອງສັນຍາປາຣີ 62

Reporting: Article 6 Regular Information: ການລາຍງານ: ບົດລາຍງານປະຈຳແຕ່ລະໄລຍະ ພາຍໃຕ້ ມາດຕາ 6 ຂອງ ສັນຍາປາຣີ 63

S

Share of Proceeds (SOP): ການແບ່ງປັນຜົນໄດ້ຮັບ 65

Subsidiary Body for Scientific and Technological Advice (SBSTA): ຄະນະກຳມະການໃຫ້ການ ແນະນຳດ້ານວິທະຍາສາດ ແລະ ເຕັກໂນໂລຊີ 65

T

The Article 6.4 Supervisory Body: ຄະນະກຳມະການຄຸ້ມຄອງມາດຕາ 6.4 ຂອງສັນຍາປາຣີ 68

Technical Expert Review: ການທົບທວນບົດລາຍງານຂອງຊ່ຽວຊານສາກົນ 68

Transferring country: ປະເທດເຈົ້າຂອງສິນເຊື່ອການປ່ອຍ 69

V

Validation: ການກວດສອບ 71

Validation & Verification Bodies: ໜ່ວຍງານກວດສອບ ແລະ ຢັ້ງຢືນ 71

Verification: ການຢັ້ງຢືນ 71

VERRA: ມາດຕະຖານເວຣາ 72

Voluntary carbon market (VCM): ຕະຫຼາດການປ່ອຍແບບສະໝັກໃຈ 72

A



Abatement cost/marginal abatement cost
ຕົ້ນທຶນໃນການຫຼຸດຜ່ອນທາດອາຍເຮືອນແກ້ວ

ອີງຕາມ ທະນາຄານໂລກ ໄດ້ອະທິບາຍ ຄຳວ່າ: "ຕົ້ນທຶນໃນການຫຼຸດຜ່ອນທາດອາຍເຮືອນແກ້ວໝາຍເຖິງ ຄ່າໃຊ້ຈ່າຍທີ່ໃຊ້ເຂົ້າໃນການປະຕິບັດມາດຕະການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຕໍ່ 1 ໂຕນ". ເວົ້າງ່າຍ ໆ ກໍຄື ຕົ້ນທຶນໃນການຫຼຸດຜ່ອນທາດອາຍເຮືອນແກ້ວ ເປັນຜົນຕອບແທນການລົງທຶນທີ່ມາຈາກການຫານຕົ້ນທຶນທັງໝົດທີ່ໃຊ້ເຂົ້າໃນກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວໃຫ້ກັບປະລິມານທາດອາຍເຮືອນແກ້ວທີ່ຫຼຸດລົງ, ຊຶ່ງຖືກຄຳນວນເປັນສະກຸນເງິນໂດລາຕໍ່ຈຳນວນ 1 ໂຕນຂອງການປ່ອນທີ່ບໍ່ໄດ້ປ່ອຍ. ຕົ້ນທຶນໃນການຫຼຸດຜ່ອນທາດອາຍເຮືອນແກ້ວ ມີຄວາມຈຳເປັນຕໍ່ນະໂຍບາຍການຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ ເນື່ອງຈາກວ່າການຄິດໄລ່ຕົ້ນທຶນດັ່ງກ່າວ ຈະຊ່ວຍສະໜອງຂໍ້ມູນກ່ຽວກັບຄ່າໃຊ້ຈ່າຍທີ່ນຳໃຊ້ເຂົ້າໃນການປະຕິບັດແນວທາງນະໂຍບາຍ, ເຕັກໂນໂລຊີ ແລະ ໂຄງການຫຼຸດຜ່ອນການປ່ອນ ທີ່ແຕກຕ່າງກັນ. ການວິເຄາະລະດັບຕົ້ນທຶນໃນການຫຼຸດຜ່ອນທາດອາຍເຮືອນແກ້ວ (MACC) ເປັນເຄື່ອງມືທີ່ສຳຄັນສຳລັບຜູ້ກຳນົດ ຫຼື ວາງນະໂຍບາຍ ໃນການປະເມີນປະສິດທິພາບຂອງການລົງທຶນເຂົ້າໃນກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວ. ການກຳນົດເອົາການຫຼຸດຜ່ອນທາດອາຍເຮືອນແກ້ວທີ່ມີຕົ້ນທຶນຕ່ຳໃຫ້ເປັນບູລິມະສິດໃນແຜນງານແຫ່ງຊາດການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (NDC) ຖືວ່າເປັນສິ່ງທີ່ຈຳເປັນສຳລັບບັນດາປະເທດກຳລັງພັດທະນາທີ່ມີຊັບພະຍາກອນຈຳກັດ.

As the World Bank explains, "The abatement cost is simply the cost of an intervention that will reduce greenhouse gas emissions by one tonne". In simple terms, the abatement cost is the result of the division between the cost of the mitigation activity and avoided emissions and is measured in dollars of carbon not emitted. Abatement costs are essential for climate mitigation policy as they provide information on the costs of investing in different decarbonization pathways, technologies, and projects. Marginal abatement cost curves (MACC) are an important tool for decision-makers interested in the allocative efficiency of mitigation investments. For developing countries with limited resources, prioritizing low abatement costs as part of their NDCs is essential.

Acquiring country
ປະເທດທີ່ຊື້ສິນເຊື່ອກາກບອນ

ໃນການເຮັດທຸລະກຳພາຍໃຕ້ມາດຕາ 6 ຂອງສັນຍາປາຣີ, ປະເທດທີ່ຊື້ສິນເຊື່ອກາກບອນ - ຫຼື ເອີ້ນອີກຢ່າງໜຶ່ງວ່າ "ປະເທດຊື້" - ເປັນປະເທດທີ່ໄດ້ຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍເຮືອນແກ້ວທີ່ຖ່າຍໂອນລະຫວ່າງປະເທດ (ITMOs). ໂດຍສ່ວນໃຫຍ່ ປະເທດທີ່ຊື້ສິນເຊື່ອກາກບອນຈະນຳໃຊ້ ITMOs ເພື່ອບັນລຸເປົ້າໝາຍຂອງຕົນໃນການຫຼຸດຜ່ອນ ທາດອາຍເຮືອນແກ້ວ ຈາກການປ່ຽນແປງດິນ

ฟ้าอากาศ (เช่น: ถาดพายสู้ชิบของแผนงาน NDC). ในกໍລะนีดั่งก่าว, ผู้ซื้ ແລะ ผู้ขาย ต้อง ได้ดำเนินการปับปับชีของตีนให้สอดถ่องกับ เพื่อหีกล่ຽงการนับปะลิมานที่ซ้ำซ้อน. การปับ ปับชีทั้งสองฝ่ายดั่งก่าว พายเถิง ปะเทดชี้ สามาดลายงาน ผีนได้ຮับจากภาคพุดผ่อมหาด อายเรือนแก้วที่ถ่ายโอมละหว่างปะเทด (ITMOs) ที่ตีนได้ชื้, ส่วมปะเทดขาย แม่นต้องได้ ปับบัดลายงานของตีนก่ຽวกับการปอยหาดอายเรือนแก้ว โดยเพิ่มปะลิมานหาดอายเรือน แก้ว ตามที่ได้ถ่ายโอมให้แก่ปะเทดชี้ ยู่ในบัดลายงานด้านวิชาการ การสำຫวดหาดอาย เรือนแก้ว (สิ่งผีนให้มีการปຽนแปง "ยอดลอมการปอยหาดอายเรือนแก้ว").

In a transaction under the Paris Agreement's Article 6 rules, the acquiring country – also sometimes known as "buyer country"- is the country that receives the Internationally Transferred Mitigation Outcomes (ITMOs). Most often, the acquiring country will use the purchased ITMOs to meet its climate goals (such as NDC targets), and in this case, both the buyer and seller would need to apply corresponding adjustments. This form of double-entry bookkeeping means that the buying country can report the ITMOs bought, while the seller country is required to adjust its reporting emissions by adding the amount of the transfer to its national inventory (resulting in an adjusted "emissions balance").

Additionality
ถอามต้องภาน ภานช่วยเหือเพิ่มเติม

ถอามต้องภาน ภานช่วยเหือเพิ่มเติม เป้นหักภานที่สำคับในภานพุดผ่อมหาดอายเรือน แก้วจากภานปຽนแปงดินฟ้าอากาดซึ่งได้กำนิดไอ้ว่า ผีนภานพุดผ่อมหาดอายเรือน แก้วพายใต้กีดจะกำใดพึ่งนั้นจะบ่สามาดบับลุได้ถ้าหากขาดภานสะพับสะพุนด้าน ภานเงินกากบอน. ถอามต้องภานภานช่วยเหือเพิ่มเติม เป้นอົงปะกอบที่สำคับในภาน ฮักสาถอามพั้นถົงด้านสิ่งแวดล้อมพายใต้สับยาปาริ. ภานฮับปะกับ กีดจะกำภานพุดผ่อม หาดอายเรือนแก้วใดพึ่ง มีถอามต้องภาน ภานช่วยเหือเพิ่มเติม แม่นต้องได้มีภานปะเมิน ภานสะพองงົบปะมานสะเพาะให้แก่กีดจะกำภานพุดผ่อมหาดอายเรือนแก้วที่จะสามาด เพิ่มถอามเป้นไปได้ในภานจัดตั้งปะติบัดกีดจะกำภานพุดผ่อมหาดอายเรือนแก้วนั้นได้ โดย สมทຽบกับกໍລะนีที่บ่มีภานสะพองภานเงินกากบอน เຂ้าในกีดจะกำดั่งก่าว. อุปะสักสำลับ กีดจะกำภานพุดผ่อมหาดอายเรือนแก้วจากภานปຽนแปงดินฟ้าอากาด ส่วมใหย่จะลอมมี อุปะสักหางด้านภานเงิน (ต๋อยาๆ: กีดจะกำพุดผ่อมหาดอายเรือนแก้วจะบ่สามาดจัดตั้ง ปะติบัดได้ โดยปาสะจากภานเงินกากบอน), อุปะสักหางด้านเต๊กโนโลสี (ต๋อยาๆ: ภานขาด เต๊กโนโลสี ที่ปอยกากบอนต่ำพายในปะเทด) ແລะ อุปะสักหางด้านสะถาบันภานจัดตั้ง (ต๋อยาๆ: ขีดถอามสามาดในภานจัดตั้งปะติบัดที่ยังจำกัด). ถอามต้องภาน ภานช่วยเหือ เพิ่มเติม อาดถืกนำไปพิจาละนาก่ຽวกับบันดาบะโยบาย ແລะ บิติกำที่ก่ຽวข้องพายใน

ປະເທດ. ຖ້າຫາກວ່າຢູ່ພາຍໃນປະເທດ ມີການວາງແຜນການຈັດຕັ້ງປະຕິບັດໂຄງການໃດໜຶ່ງພາຍໃຕ້ ແຜນງານ NDC ຂອງຕົນ ແລະ ມີຊັບພະຍາກອນທີ່ພຽງພໍໃນການດຳເນີນການຈັດຕັ້ງປະຕິບັດດັ່ງກ່າວ ແມ່ນຈະບໍ່ສາມາດຖືກພິຈາລະນາວ່າມີຄວາມຕ້ອງການ ການຊ່ວຍເຫຼືອເພີ່ມເຕີມໄດ້.

Additionality is an essential principle of climate change mitigation according to which the mitigation achieved by a given mitigation activity would not have been possible without carbon finance. Additionality is a key element of environmental integrity under the Paris Agreement. Ensuring the additionality of a mitigation activity requires determining how carbon finance enhances the viability of a mitigation activity, compared to a scenario in which there is no carbon finance. Barriers to mitigation activities often include financial barriers (e.g., the mitigation activity is not economically viable without carbon finance), technological barriers (e.g., lack of availability of low-carbon technologies in the host country), and institutional barriers (e.g., limited capacity for implementation). Additionality might also be considered with regard to relevant national policies and legislation. If a host country had planned to implement a given project under its NDC, and has adequate resources to do so, it cannot be considered additional.

Ambition
ການເພີ່ມຄວາມພະຍາຍາມ

ການເພີ່ມຄວາມພະຍາຍາມ ເປັນຫຼັກການທີ່ສຳຄັນ ພາຍໃຕ້ສັນຍາປາຣີຊຶ່ງປະເທດພາຄີຕ້ອງໄດ້ ເພີ່ມຄວາມພະຍາຍາມໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ໃນທຸກ ໆ 5 ປີ ໂດຍ ການທົບທວນ ແລະ ປັບປຸງ ແຜນງານແຫ່ງຊາດການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນ ຟ້າອາກາດ (NDCs) ຂອງຕົນ. ເນື້ອໃນຂອງແຜນງານ NDCs ຕ້ອງສະແດງໃຫ້ເຫັນເຖິງຄວາມ ພະຍາຍາມໃນການບັນລຸຄາດໝາຍສູ້ຊົນ ໃນແຕ່ລະໄລຍະໃຫ້ຫຼາຍຂຶ້ນ ແລະ ສະທ້ອນເຖິງຄວາມ ພະຍາຍາມສູງສຸດຂອງປະເທດທີ່ລະບຸໄວ້ໃນສັນຍາປາຣີ (ມາດຕາ 4, ວັກ 2–4).

Ambition is a key principle under the Paris Agreement, as Parties must increase their efforts to address climate change every five years through the revision and update of their Nationally Determined Contributions (NDCs). NDCs must be increasingly ambitious, that is demonstrate a progression beyond the previous pledge, and to reflect a country's "highest possible ambition" (Article 4, paragraph 2-4).

Approval
ການຮັບຮອງ

ການຮັບຮອງ ເປັນຄຳສັບທີ່ມີຫຼາຍຄວາມໝາຍແຕກຕ່າງກັນໄປຕາມແຕ່ກໍລະນີ. ໃນຕະຫຼາດການ ບອນແບບສະໝັກໃຈ ແລະ/ຫຼື ກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວທີ່ໄດ້ພັດທະນາຂຶ້ນພາຍໃຕ້ ມາດຕາ 6 ຂອງສັນຍາປາຣີ, ການຮັບຮອງກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວ ອາດເປັນ ບາດກ້າວທີ່ຈຳເປັນພາຍໃຕ້ນິຕິກຳຂອງປະເທດ ທີ່ລັດຖະບານໄດ້ຮັບຮອງໃຫ້ຈັດຕັ້ງປະຕິບັດ. ໃນກໍລະນີ ດຽວກັນ ຍັງສາມາດນຳໃຊ້ສຳລັບກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວ ທີ່ຢູ່ພາຍໃຕ້ມາດຕາ 6.4 ຂອງສັນຍາປາຣີຊຶ່ງລັດຖະບານທີ່ເປັນເຈົ້າຂອງສິນເຊື່ອການບອນ ຈະຕ້ອງນຳສົ່ງເນື້ອໃນກິດ ຈະກຳຫຼຸດຜ່ອນທາດອາຍເຮືອນແກ້ວທີ່ໄດ້ຮັບຮອງເອົາໃຫ້ກັບໜ່ວຍງານໃຫ້ຄຳແນະນຳການຈັດຕັ້ງ ປະຕິບັດມາດຕາ 6.4 ຂອງສັນຍາປາຣີ ກ່ອນທີ່ຈະລົງທະບຽນກິດຈະກຳດັ່ງກ່າວເຂົ້າໃນກົນໄກ ມາດ ຕາ 6.4 ຂອງສັນຍາປາຣີ. ນອກນັ້ນ, ຍັງໄດ້ນຳໃຊ້ເຂົ້າໃນ ບັນດາໂຄງການ ພາຍໃຕ້ກົນໄກການ ພັດທະນາສະອາດ ທີ່ຈະຫັນປ່ຽນໄປສູ່ກົນໄກ ມາດຕາ 6.4 ຂອງສັນຍາປາຣີ. ການຮັບຮອງ ແມ່ນຕ່າງ ຈາກຄຳວ່າ "ການອະນຸມັດ" ທີ່ມີນິຍາມສະເພາະພາຍໃຕ້ກົດລະບຽບມາດຕາ 6 ຂອງສັນຍາປາຣີ ແລະ ໝາຍເຖິງການຕົກລົງຂອງລັດຖະບານໃນການ "ອະນຸມັດ" ໃຫ້ມີການນຳໃຊ້ຜົນໄດ້ຮັບຈາກ ການຫຼຸດ ຜ່ອນທາດອາຍເຮືອນແກ້ວທີ່ຖ່າຍໂອນລະຫວ່າງປະເທດ (ITMOs), "ອະນຸມັດ" ໃຫ້ບຸກຄົນ, ນິຕິບຸກຄົນ ທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດກິດຈະກຳຫຼຸດຜ່ອນທາດອາຍເຮືອນແກ້ວພາຍໃຕ້ມາດຕາ 6 ຂອງ ສັນຍາປາຣີ ແລະ "ອະນຸມັດ" ໃຫ້ມີການຮ່ວມມືພາຍໃຕ້ມາດຕາ 6.2 ຂອງສັນຍາປາຣີ.

Approval is a term with different definitions according to the context. Under voluntary carbon markets and/or for mitigation activities developed under Article 6, the approval of a mitigation activity is sometimes a required step under national legislation, through which the Government allows the activity to be implemented. This term is also used for Article 6.4 mitigation activities. In this case, the host country government must provide approval of mitigation activities to the Article 6.4 Supervisory Body before such activities can be registered under the Article 6.4 Mechanism. This approval also applies to existing Clean Development Mechanism (CDM, under the now inactive Kyoto Protocol) projects that have applied to transition to the Article 6.4 Mechanism. The term is not to be confused with "authorization", which has a specific meaning under the Article 6 rules and refers to the host country Government decision to "authorize" the use of ITMOs, "authorize" entities involved in the implementation of an Article 6 mitigation activity, and "authorize" Article 6.2 cooperative approaches.

Article 6 of the Paris Agreement
ມາດຕາ 6 ຂອງສັນຍາປາຣີ ວ່າດ້ວຍການປ່ຽນແປງດິນຟ້າອາກາດ

ມາດຕາ 6 ຂອງສັນຍາປາຣີ ກຳນົດໃຫ້ລັດພາຄີດຳເນີນການຮ່ວມມືແບບສະໝັກໃຈເພື່ອບັນລຸເປົ້າໝາຍການຫຼຸດຜ່ອນທາດອາຍເຮືອນແກ້ວທີ່ໄດ້ກຳນົດໄວ້ໃນແຜນງານແຫ່ງຊາດການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (NDCs). ມາດຕາ 6 ຂອງສັນຍາປາຣີ ຮັບຮູ້ວ່າ ລັດພາຄີອາດເລືອກທີ່ຈະດຳເນີນ ການຮ່ວມມືແບບສະໝັກໃຈໃນການຈັດຕັ້ງປະຕິບັດແຜນງານ NDCs ຂອງຕົນ. ສຳລັບບັນດາປະເທດທີ່ມີຄວາມສົນໃຈໃນການຊື້ສິນເຊື່ອການປ່ອຍ ພາຍໃຕ້ມາດຕາ 6 ຂອງສັນຍາປາຣີ ຍ້ອນວ່າ ບາງກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວຢູ່ປະເທດອື່ນ ແມ່ນມີລາຄາຖືກກວ່າຈະດຳເນີນການເອງຢູ່ປະເທດຕົນ. ສຳລັບບັນດາປະເທດທີ່ມີຄວາມຕ້ອງການ ໃນການຂາຍສິນເຊື່ອການປ່ອຍຕາມພາຍໃຕ້ ມາດຕາ 6 ຂອງສັນຍາປາຣີ, ບັນດາປະເທດທີ່ຈະເຂົ້າຮ່ວມການຊື້-ຂາຍຕ້ອງແຈ້ງແຫຼ່ງທີ່ມາຂອງທຶນ ແລະ/ຫຼື ເຕັກໂນໂລຊີ ທີ່ຈະນຳໃຊ້ເຂົ້າໃນກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວ ເພື່ອໃຫ້ການຊື້-ຂາຍດຳເນີນການໄດ້ (ຕົວຢ່າງ: ບັນດາປະເທດເຫຼົ່ານັ້ນຂາດແຄນຊັບພະຍາກອນ, ເຕັກໂນໂລຊີ ຫຼື ຄວາມສາມາດ).

Article 6 of the Paris Agreement allows Parties to voluntarily cooperate in achieving their emission reduction (mitigation) targets set in NDCs. Article 6 of the Paris Agreement recognizes that some Parties may choose to pursue voluntary cooperation in the implementation of their NDCs. For countries interested in purchasing Article 6 credits, this is because some mitigation can be achieved more cheaply abroad than through domestic mitigation measures. For countries looking to sell Article 6 credits, Article 6 participation can provide a source of finance and/or technology to implement mitigation activities that would otherwise not be possible (for e.g., because they lack the resources, technology, or capacity).

Article 6, paragraph 2 of the Paris Agreement
ມາດຕາ 6.2 ຂອງສັນຍາປາຣີ

ມາດຕາ 6.2 ຂອງສັນຍາປາຣີ ກຳນົດແນວທາງໃນການດຳເນີນການຮ່ວມມື, ວິທີການຄິດໄລ່ ແລະ ການລາຍງານກ່ຽວກັບການຖ່າຍໂອນຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍເຮືອນແກ້ວທີ່ຖ່າຍໂອນລະຫວ່າງປະເທດ. ມາດຕານີ້ ໄດ້ວາງກອບແຜນງານລວມກ່ຽວກັບການຖ່າຍໂອນປະລິມານການຫຼຸດຜ່ອນທາດອາຍເຮືອນແກ້ວລະຫວ່າງປະເທດ (ເອີ້ນວ່າ "ຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍເຮືອນແກ້ວ") - ການຖ່າຍໂອນເຫຼົ່ານີ້ ກໍຄື ITMOs - ທີ່ໄດ້ຮັບການ "ອະນຸມັດ" ຈາກລັດຖະບານຂອງລັດພາຄີທີ່ດຳເນີນກິດຈະກຳດັ່ງກ່າວ. "ປະມວນກິດລະບຽບ" ມາດຕາ 6.2 ຂອງສັນຍາປາຣີ ແມ່ນຂໍ້ຕົກລົງທີ 2 ຂອງຄະນະກຳມະການສັນຍາປາຣີ ຄັ້ງທີ 3. (Decision 2/CMA.3).

Article 6.2 provides guidance on cooperative approaches and how to account for and report on the international transfer of mitigation outcomes. This article puts in place the overarching framework for the international transfer of GHG emissions reductions (now referred to as "mitigation outcomes") – those transfers being known as ITMOs - that have been "authorized" by the host country government for a specific use. The Article 6.2 "rulebook" is Decision 2/CMA.3.

Article 6, paragraph 4 of the Paris Agreement
ມາດຕາ 6.4 ຂອງສັນຍາປາຣີ

ມາດຕາ 6.4 ຂອງສັນຍາປາຣີ ກຳນົດກົນໄກການໃຫ້ສິນເຊື່ອການບອນລະຫວ່າງປະເທດ ເພື່ອການອອກສິນເຊື່ອການບອນ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງກອງເລຂາ ສົນທິສັນຍາສະຫະປະຊາຊາດວ່າດ້ວຍການປ່ຽນແປງດິນຟ້າອາກາດ (UNFCCC). ຫົວໜ່ວຍສິນເຊື່ອການບອນທີ່ຖືກຮັບຮອງຜ່ານກົນໄກຂອງມາດຕາ 6.4 ຂອງສັນຍາປາຣີເອີ້ນວ່າ ຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍເຮືອນແກ້ວ (ຫຼື ເອີ້ນຫຍໍ້ວ່າ "A6.4ERs"). ມາດຕານີ້ກຳນົດກົດລະບຽບ ແລະ ວິທີການສ້າງກົນໄກການໃຫ້ສິນເຊື່ອການບອນ ລະຫວ່າງປະເທດ ເພື່ອສ້າງຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍເຮືອນແກ້ວ, ຊຶ່ງເປັນການປ່ຽນແທນກົນໄກການພັດທະນາສະອາດ (CDM). ດັ່ງນັ້ນ ປະເທດຜູ້ຂາຍສິນເຊື່ອການບອນ ຫຼື ປະເທດທີ່ດຳເນີນກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວ ກໍຄື ສປປ ລາວ ສາມາດນຳໃຊ້ທັງມາດຕາ 6.2 ແລະ 6.4 ຂອງສັນຍາປາຣີໄດ້ ເຊັ່ນ: ສປປ ລາວ ສາມາດອອກອະນຸມັດການຂາຍຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍເຮືອນແກ້ວ (A6.4ERs) ໃຫ້ແກ່ປະເທດ x ພາຍໃຕ້ກົນໄກຂອງມາດຕາ 6.2 ຂອງສັນຍາປາຣີ ແລະ ຖືເອົາການຖ່າຍໂອນດັ່ງກ່າວໃຫ້ຢູ່ພາຍໃຕ້ A6.4ERs ໄດ້ ແລະ ສົ່ງບົດລາຍງານທີ່ກ່ຽວຂ້ອງໃຫ້ແກ່ກອງເລຂາ UNFCCC ໂດຍອີງຕາມປະມວນກົດລະບຽບມາດຕາ 6.2 ຂອງສັນຍາປາຣີ. ມາດຕາ 6.4 ຂອງສັນຍາປາຣີ "ກົດລະບຽບ, ນະໂຍບາຍ ແລະ ຂັ້ນຕອນການດຳເນີນງານ" ໄດ້ກຳນົດໄວ້ໃນຂໍ້ຕົກລົງທີ 3 ຂອງຄະນະກຳມະການສັນຍາປາຣີ ຄັ້ງທີ 3 (Decision 3/ CMA.3).

Article 6.4 establishes an international crediting mechanism for issuing mitigation outcomes, supervised by the UNFCCC. The units issued by the Article 6.4 mechanism are known as Article 6.4 emission reductions (or "A6.4 ERs"). This article sets the rules and modalities for the establishment of such an international crediting mechanism to produce Mitigation Outcomes, replacing the CDM. A host country such as Lao PDR can therefore both simultaneously use Articles 6.2 and 6.4: for example, Lao PDR would authorize the sale of A6.4ERs to country x under an Article 6.2 approach, and accounts for such transfer of authorized A6.4ERs, and submits relevant reports to the UNFCCC, in accordance with the Article 6.2 rules. The Article 6.4 "Rules, Modalities, and Procedures" are in Decision 3/ CMA.3.

Article 6, paragraph 8 of the Paris Agreement
ມາດຕາ 6.8 ຂອງສັນຍາປາຣີ

ມາດຕາ 6.8 ຂອງສັນຍາປາຣີ ກຳນົດກ່ຽວກັບ "ນະໂຍບາຍທີ່ບໍ່ນຳໃຊ້ກົນໄກຕະຫຼາດ" (NMAs) ຂອງ ລັດຖະບານໃນການບັນລຸເປົ້າໝາຍ NDC ຂອງຕົນ ໂດຍປາສະຈາກການນຳໃຊ້ກົນໄກຕະຫຼາດການ ບອນ. ໂດຍຕ່າງຈາກມາດຕາ 6.2 ແລະ 6.4, ມາດຕາ 6.8 ຂອງສັນຍາປາຣີ ກຳນົດກອບການຮ່ວມມື ໂດຍທີ່ບໍ່ນຳໃຊ້ກົນໄກການຊື້-ຂາຍ, ແຕ່ເປັນການຮ່ວມມືໂດຍການພັດທະນາຂີດຄວາມສາມາດ, ການ ສະໜັບສະໜູນທາງດ້ານການເງິນການປ່ຽນແປງດິນຟ້າອາກາດສາກົນ, ການສະໜອງທຶນໂດຍອີງໃສ່ ຜົນໄດ້ຮັບ ຫຼື ການຖ່າຍໂອນເຕັກໂນໂລຊີ.

Article 6.8 addresses "non-market approaches' (NMAs) among government to achieve their NDC targets without relying on carbon markets. Unlike Articles 6.2 and 6.4, Article 6.8 considers cooperation without trade, through capacity development, international climate finance, results-based payments, or technology transfers.

Article 6 Database
ຖານຂໍ້ມູນອອນລາຍພາຍໃຕ້ ມາດຕາ 6 ຂອງສັນຍາປາຣີ

ຖານຂໍ້ມູນອອນລາຍພາຍໃຕ້ມາດຕາ 6 ຂອງສັນຍາປາຣີ ແມ່ນເຄື່ອງມືທີ່ໃຊ້ບັນທຶກການສົ່ງບົດລາຍ ງານຈາກລັດພາຄີທີ່ນຳໃຊ້ມາດຕາ 6 ຂອງສັນຍາປາຣີ. ຖານຂໍ້ມູນອອນລາຍນີ້ ຈະຖືກສ້າງຂຶ້ນໂດຍ ກອງເລຂາ UNFCCC ແລະ ຕິດຕັ້ງຢູ່ພາຍໃນຖານຂໍ້ມູນສູນກາງ ການຄິດໄລ່ ແລະ ລາຍງານ (CARP). ຖານຂໍ້ມູນນີ້ຈະບັນທຶກ ແລະ ລວບລວມຂໍ້ມູນທີ່ລັດພາຄີ ທີ່ນຳໃຊ້ມາດຕາ 6 ໄດ້ສົ່ງມາໃນແຕ່ລະປີ ລວມ ທັງຂໍ້ມູນການປັບປັນຊີຂອງລັດພາຄີ ທັງສອງຝ່າຍໃຫ້ສອດຄ່ອງກັນ, ຍອດລວມການປ່ອຍທາດອາຍ ເຮືອນແກ້ວ, ການຖ່າຍໂອນ, ການຊື້, ການຄອບຄອງ ຫຼື ຍົກເລີກຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍ ເຮືອນແກ້ວທີ່ຖ່າຍໂອນລະຫວ່າງປະເທດ (ITMOs).

This is an online database that will keep records of submission from Parties using Article 6. The online database will be developed by the UNFCCC Secretariat and housed within the Centralised Accounting and Reporting Platform (CARP). The database will record and compile information submitted annually by Parties using Article 6 including on their application of corresponding adjustments, their emission balances, and their transfer, acquisition, holding or cancellation of Internationally Transferred Mitigation Outcomes (ITMOs).

Article 6.4 Mechanism
ກົນໄກການລົງທະບຽນ ມາດຕາ 6.4 ຂອງສັນຍາປາຣີ

ກົນໄກການລົງທະບຽນ ມາດຕາ 6.4 ຂອງສັນຍາປາຣີ ໝາຍເຖິງ ລະບົບສຳລັບອອກ ແລະ ຕິດຕາມ ສິນເຊື່ອ ພາຍໃຕ້ກົນໄກມາດຕາ 6.4 ໂດຍຈະຮວບຮວມເອົາຂໍ້ມູນການເຄື່ອນໄຫວກິດຈະກຳ ແລະ ຫົວໜ່ວຍທັງໝົດ ໃຫ້ສາມາດນຳໃຊ້ໄດ້ຢ່າງງ່າຍດາຍ.

The 'A6.4 Mechanism Registry' is a system to issue and track credits under the Article 6.4 mechanism which will include all activity- and unit-related data made available in a user-friendly manner.

Attribution
ການລະບຸແຫຼ່ງທີ່ມາ

ການລະບຸແຫຼ່ງທີ່ມາ ໝາຍເຖິງ ການລະບຸແຫຼ່ງທີ່ມາຂອງການສະໜັບສະໜູນທາງດ້ານການເງິນ ການປ່ຽນແປງດິນຟ້າອາກາດ ແລະ ການປ່ອຍໄປພ້ອມ ໆ ກັນ ເພື່ອບັນລຸເປົ້າໝາຍການຫຼຸດຜ່ອນທາດອາຍເຮືອນແກ້ວ. ການຫຼຸດຜ່ອນທາດອາຍເຮືອນແກ້ວ ເປັນຜົນມາຈາກ ສອງແຫຼ່ງການສະໜັບສະໜູນ ຄື ການສະໜັບສະໜູນຈາກການເງິນການປ່ອຍ ແລະ ການສະໜັບສະໜູນທາງການເງິນທີ່ແຍກອອກ ມາສະເພາະຈາກການປ່ຽນແປງດິນຟ້າອາກາດ ເຊັ່ນ: ທຶນຊ່ວຍເຫຼືອລ້າ, ຈະຕ້ອງໄດ້ຮັບການ ລະບຸແຫຼ່ງທີ່ມາຢ່າງຊັດເຈນ ຖ້າຫາກບົດບາດຂອງທັງສອງແຫຼ່ງທຶນນັ້ນບໍ່ໄດ້ຮັບການລະບຸທີ່ເໝາະສົມ ອາດເຮັດໃຫ້ເກີດມີຄວາມສ່ຽງຕໍ່ຄວາມໝັ້ນຄົງທາງດ້ານສິ່ງແວດລ້ອມ ແລະ ການເງິນ. ການລະບຸບົດ ບາດຂອງແຕ່ລະແຫຼ່ງທຶນທີ່ສະໜັບສະໜູນກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວ ເປັນສິ່ງທີ່ຈຳ ເປັນຕໍ່ຕະຫຼາດການປ່ອຍ ເພື່ອຮັບຮູ້ບົດບາດຂອງຕະຫຼາດການປ່ອຍ ໃນຖານະທີ່ເປັນເຄື່ອງມືໃນການ ສ້າງແຫຼ່ງທຶນເພີ່ມເຕີມ. ຖ້າຫາກບໍ່ມີການລະບຸແຫຼ່ງທີ່ມາຂອງທຶນ, ການສະໜັບສະໜູນທາງການເງິນ ດັ່ງກ່າວ ອາດຈະຖືກນຳມາໃຊ້ອຸດໜູນຕົ້ນທຶນຂອງສິນເຊື່ອການປ່ອຍ.

Attribution is a term used when climate and carbon finance are used simultaneously to achieve emission reductions. When emission reductions are not only the result of carbon finance but are also the result of a separate stream(s) of climate finance (e.g. a grant), environmental and financial integrity can be at stake if their respective roles are not properly accounted for. In fact, measuring precisely what the role of each source of finance in a given mitigation activity is essential for carbon markets to realize their role as a tool generating additional finance. Unaccounted, climate finance would essentially be subsidizing the cost of carbon credits.

Authorization
ການອະນຸມັດ

ການອະນຸມັດ ໝາຍເຖິງ ເມື່ອປະເທດຂາຍສິນເຊື່ອການປ່ອຍ ກຳນົດໃຫ້ຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍເຮືອນແກ້ວ ທີ່ໄດ້ຮັບຈາກໂຄງການ ສາມາດນຳໃຊ້ເພື່ອຈຸດປະສົງສະເພາະເຊັ່ນ: ເພື່ອບັນລຸຄາດໝາຍ NDC ຂອງປະເທດຜູ້ຊື້. ລັດຖະບານຂອງປະເທດທີ່ຂາຍສິນເຊື່ອການປ່ອຍດຳເນີນ "ການອະນຸມັດ" ໂດຍການສ້າງ ITMO ແລະ ຕ້ອງປັບບັນຊີທາດອາຍເຮືອນແກ້ວຂອງຕົນໃຫ້ສອດຄ່ອງຕາມການຖ່າຍໂອນ (ຕົວຢ່າງ: ການຫັກເອົາຜົນການຫຼຸດຜ່ອນທາດອາຍເຮືອນແກ້ວທີ່ຕົນໄດ້ບັນລຸອອກຈາກຍອດລວມການປ່ອຍທາດອາຍເຮືອນແກ້ວ). ມາດຕາ 6.2 ຂອງສັນຍາປາຣີ ກຳນົດໃຫ້ບັນດາປະເທດຕ່າງ ໆ ສ້າງໂຄງຮ່າງການຈັດຕັ້ງ ແລະ ຂະບວນການທີ່ຊັດເຈນ ສຳລັບການອະນຸມັດໃຫ້ຂາຍຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍເຮືອນແກ້ວທີ່ຖ່າຍໂອນລະຫວ່າງປະເທດ ແບບ ITMOs, ລວມທັງ ການປັບບັນຊີໃຫ້ສອດຄ່ອງກັນສຳລັບທຸກ ໆ ITMOs ທີ່ໄດ້ຮັບການອະນຸຍາດໃຫ້ຂາຍ.

Authorization happens when a host country states that the mitigation outcomes (emission reductions) achieved through a mitigation activity can be used for a specific purpose, such as towards another country's NDC. The act of "authorization" by the host country government is what creates an ITMO and compels the host country to apply a corresponding adjustment (i.e. to subtract the mitigation outcomes achieved from its emissions balance). Article 6.2 requires countries to establish clear institutional arrangements and processes for the authorization of mitigation outcomes to be sold as ITMOs, including for the application of corresponding adjustments for all authorized ITMOs.

Avoidance
ການຫຼີກລ່ຽງ

ໂດຍທົ່ວໄປແລ້ວ ການຫຼີກລ່ຽງ ຫມາຍເຖິງ ຂະບວນການປ້ອງກັນການປ່ອຍທາດອາຍເຮືອນແກ້ວເພີ່ມຂຶ້ນສູ່ຊັ້ນບັນຍາກາດດ້ວຍການຫຼຸດຜ່ອນແຫຼ່ງທີ່ມາຂອງການປ່ອຍ. ໃຫ້ຮັບຮູ້ໄວ້ວ່າ "ການຫຼີກລ່ຽງ" ຍັງມີຄວາມສັບສົນກັນກັບ "ການຫຼຸດຜ່ອນການປ່ອຍ", ໂດຍສະເພາະໃນເງື່ອນໄຂຂອງມາດຕາ 6, ແລະ ຍັງບໍ່ມີຄຳອະທິບາຍທີ່ເປັນເອກະພາບກັນໃນທົ່ວໂລກກ່ຽວກັບຄວາມແຕກຕ່າງລະຫວ່າງທັງສອງ. ຕົວຢ່າງ, ສິນເຊື່ອທີ່ສ້າງຂຶ້ນຈາກການຫຼີກລ່ຽງການຕັດໄມ້ທຳລາຍປ່າ ທີ່ມີຜົນໃນການປ່ອຍການປ່ອຍອອກສູ່ຊັ້ນບັນຍາກາດ ແມ່ນມັກຈະເອີ້ນວ່າສິນເຊື່ອ "ການຫຼີກລ່ຽງ", ແຕ່ບາງຄັ້ງກໍຖືກຕີຄວາມໝາຍວ່າເປັນສິນເຊື່ອ "ການຫຼຸດຜ່ອນ".

Avoidance generally means the process of preventing additional greenhouse gas emissions from entering the atomosphere by reducing sources of emissions. It is important to note that "avoidance" is widely confused with "reduction", especially in

the context of Article 6, and there is no globally agreed definition on the differences between the two. For eample, credits generated from avoiding deforestation that would result in the release of carbon dioxide into the atmosphere are often called “avoidance” credits, but they are also sometimes interpreted as “reduction” credits.

B



Benefit Sharing
ການແບ່ງປັນຜົນປະໂຫຍດ

ການແບ່ງປັນຜົນປະໂຫຍດສຳລັບຕະຫຼາດການກຳນົດໝາຍເຖິງການແບ່ງປັນຜົນປະໂຫຍດທາງດ້ານການເງິນ ຫຼື ຜົນປະໂຫຍດທີ່ເກີດຂຶ້ນນອກເໜືອຈາກຕົ້ນທຶນທີ່ຜູ້ພັດທະນາໂຄງການຕ້ອງຮັບຜິດຊອບ. ຜູ້ທີ່ຈະໄດ້ຮັບຜົນປະໂຫຍດຈາກການແບ່ງປັນຜົນປະໂຫຍດເຫຼົ່ານີ້ ອາດຈະມີຫຼາຍພາກສ່ວນເຊັ່ນ ຊຸມຊົນທ້ອງຖິ່ນ, ລັດຖະບານຂັ້ນແຂວງ, ແລະ ລັດຖະບານຂັ້ນສູນກາງ. ເຖິງຢ່າງໃດກໍຕາມ, ການແບ່ງປັນຜົນປະໂຫຍດ ກໍຍັງບໍ່ມີຄຳອະທິບາຍຢ່າງເປັນທາງການ ຊຶ່ງທົ່ວໄປແລ້ວຈະຖືກກຳນົດໂດຍໜ່ວຍງານທີ່ກ່ຽວຂ້ອງ.

In the context of carbon markets, benefit-sharing is often defined as the sharing of benefits that include financial benefits or non-financial beyond the costs incurred by project developers. The recipients to such benefit sharing may include a broad range of stakeholders including local communities and provincial and national governments. It is important to note that benefit sharing is a concept with no agreed-upon definition and is usually defined by the respective entities.

Biennial Transparency Report (BTR)
ບົດລາຍງານຄວາມໂປ່ງໃສ ທຸກສອງປີ (BTR)

ບົດລາຍງານຄວາມໂປ່ງໃສທຸກສອງປີ (BTR) ຕ້ອງໄດ້ຍື່ນສະເໜີໜຶ່ງຄັ້ງໃນທຸກສອງປີຊຶ່ງປະກອບມີຂໍ້ມູນກ່ຽວກັບບົດລາຍງານການສຳຫຼວດທາດອາຍເຮືອນແກ້ວແຫ່ງຊາດ (NIR), ຄວາມຄືບໜ້າຂອງແຜນງານNDCs,ນະໂຍບາຍແລະມາດຕະການ,ຜົນກະທົບແລະການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ,ສະຖານະດ້ານການເງິນ,ການພັດທະນາແລະການຖ່າຍໂອນເຕັກໂນໂລຊີແລະການສະໜັບສະໜູນການສ້າງຄວາມອາດສາມາດ, ຄວາມຈຳເປັນໃນການສ້າງຂີດຄວາມສາມາດ ແລະ ຂົງເຂດທີ່ຕ້ອງການປັບປຸງ. ໝູ່ເກາະນ້ອຍທີ່ກຳລັງພັດທະນາ (SIDS) ແລະ ປະເທດດ້ອຍພັດທະນາ (LDCs) ອາດຈະຍື່ນສະເໜີຂໍ້ມູນທີ່ຈຳເປັນສຳລັບ BTR ຕາມການພິຈາລະນາຂອງຕົນ.

The Biennial Transparency Report (BTR) needs to be submitted once in two years and include information on national inventory reports (NIR), progress towards NDCs, policies and measures, climate change impacts and adaptation, levels of financial, technology development and transfer and capacity-building support, capacity-building needs and areas of improvement. Small Islands Developing States (SIDS) and Least Developed Countries (LDCs) may submit the information required for the BTR at their discretion.

C



Carbon credit
ສິນເຊື່ອກາກບອນ

ສິນເຊື່ອກາກບອນ ແມ່ນ ສິດທີ່ເກີດຈາກການດຳເນີນໂຄງການ ຫຼື ກິດຈະການຕ່າງ ໆ ທີ່ເປັນ ການຫຼຸດຜ່ອນປະລິມານການປ່ອຍ, ການດູດຊັບ ແລະ ການເກັບກັກ ທາດອາຍເຮືອນແກ້ວ ຊຶ່ງແຕ່ລະທາດຕ້ອງໄດ້ຄິດໄລ່ເປັນຫົວໜ່ວຍທຽບເທົ່າເປັນໂຕນກາກບອນໄດອອກໄຊ (tCO2e) ແລະ ສິດດັ່ງກ່າວ ສາມາດແລກປ່ຽນ ຫຼື ຊື້-ຂາຍ ຢູ່ໃນຕະຫຼາດສິນເຊື່ອກາກບອນ.

MAIN ແມ່ນເອກະສານຢູ່ໃນໄລຍະກະກຽມເບື້ອງຕົ້ນ ຂອງການອອກແບບໂຄງການຊຶ່ງມີຂໍ້ມູນເບື້ອງຕົ້ນ ກ່ຽວກັບກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວ, ສະພາບລວມ, ຄາດຄະເນການຫຼຸດຜ່ອນທາດອາຍເຮືອນແກ້ວ, ການປະກອບສ່ວນເຂົ້າໃນການພັດທະນາແບບຍືນຍົງ, ແຜນການວັດແທກ, ລາຍງານ ແລະ ຢັ້ງຢືນ (MRV) ແລະ ການຈັດສັນງົບປະມານໂຄງການ. **MADD** ປະກອບດ້ວຍຂໍ້ມູນກ່ຽວກັບກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວ ເຊັ່ນ: ການຄິດໄລ່ການຫຼຸດຜ່ອນທາດອາຍເຮືອນແກ້ວ ໂດຍອີງຕາມວິທີການທີ່ກ່ຽວຂ້ອງ. ແຕ່ລະມາດຕະຖານການຫຼຸດຜ່ອນການກບອນ ຈະມີແບບພິມເອກະສານໂຄງການສະເພາະຊຶ່ງໃນນັ້ນລວມທັງ MAIN ແລະ MADD. ນອກຈາກນັ້ນ ເອກະສານທີ່ອາດຈະໄດ້ປະກອບເພີ່ມເຕີມເຊັ່ນ: ບົດລາຍງານການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ຫຼື ບົດລາຍງານການປຶກສາຫາລືກັບຄູ່ຮ່ວມມື. ພາຍໃຕ້ມາດຕາ 6 ຂອງສັນຍາປາຣີ, ຜູ້ພັດທະນາໂຄງການ/ເຈົ້າຂອງໂຄງການ ຫຼື ນຳສະເໜີໂຄງການ ຈະສ້າງເອກະສານ 2 ສະບັບທີ່ກຳນົດລາຍລະອຽດກ່ຽວກັບໂຄງການເພື່ອສົ່ງໃຫ້ກັບລັດຖະບານຂອງປະເທດຂາຍຊຶ່ງເປັນຂັ້ນຕອນໜຶ່ງໃນຂະບວນການສະເໜີຂໍຮັບຮອງ ຫຼື ອະນຸມັດຊຶ່ງໄດ້ແກ່ ເອກະສານກອບແນວຄວາມຄິດກ່ຽວກັບກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວ (MAIN) ແລະ ເອກະສານອອກແບບໂຄງການລະອຽດກ່ຽວກັບກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວ (MADD).

The MAIN is a document prepared in the early stages of the project design which provides preliminary information related to the proposed mitigation activity, its context, estimated emission reductions, contributions to sustainable development, MRV plans, and project financial arrangements. **A MADD** contains more detailed information on the mitigation activity, including detailed emission reduction calculations, as per the relevant methodology. Each carbon standard has its own templates for project design documents, including the MAIN and MADD. Note that other supporting documentation may be required, such as Environmental Impact Assessments or stakeholder consultation reports.

Under Article 6, a project proponent will develop two key project documents that will be submitted to the host country government as part of the process for requesting approval/authorization: a MAIN and a MADD.

Mitigation Contribution Unit (Article 6.4 MCU)

ຫົວໜ່ວຍການປະກອບສ່ວນຫຼຸດຜ່ອນທາດອາຍເຮືອນແກ້ວ ພາຍໃຕ້ ມາດຕາ 6 ຂອງສັນຍາປາຣີ

ຫົວໜ່ວຍການປະກອບສ່ວນຫຼຸດຜ່ອນທາດອາຍເຮືອນແກ້ວ ແມ່ນ ຫົວໜ່ວຍປະເພດໜຶ່ງ ທີ່ຖືກຮັບຮອງພາຍໃຕ້ມາດຕາ 6.4ຊຶ່ງຫົວໜ່ວຍນີ້ ຈະບໍ່ໄດ້ຮັບອະນຸຍາດນຳໃຊ້ເຂົ້າໃນ NDCs ຫຼື ໃນການຫຼຸດຜ່ອນທາດອາຍເຮືອນແກ້ວລະຫວ່າງປະເທດໃນຈຸດປະສົງອື່ນ (ເຊັ່ນ: CORSIA). ສະນັ້ນ, ຈຶ່ງບໍ່ຈຳເປັນຕ້ອງມີການປັບບັນຊີໃຫ້ສອດຄ່ອງກັນ. ຫົວໜ່ວຍ MCUs ຖືກນຳໃຊ້ໃນການຫຼຸດຜ່ອນລະດັບການປ່ອຍຢູ່ໃນປະເທດຂາຍ "ການເງິນດ້ານການປຽນແປງດິນຟ້າອາກາດໂດຍອີງໃສ່ຜົນໄດ້ຮັບ, ແຜນການກຳນົດລາຄາກາກບອນພາຍໃນປະເທດ ຫຼື ມາດຕະການ/ນະໂຍບາຍກຳນົດລາຄາພາຍໃນປະເທດ".ເຖິງຢ່າງໃດກໍຕາມ,ມາດຕາດັ່ງກ່າວບໍ່ໄດ້ກຳນົດວ່າມີພຽງແຕ່ວິທີການເຫຼົ່ານີ້ເທົ່ານັ້ນທີ່ສາມາດນຳໃຊ້ໄດ້. ຫົວໜ່ວຍປະເພດສອງ ທີ່ຖືກຮັບຮອງພາຍໃຕ້ມາດຕາ 6.4ຊຶ່ງໄດ້ຮັບອະນຸຍາດຈາກປະເທດຂາຍນຳໃຊ້ໃນເຂົ້າໃນ NDCs ແລະ/ຫຼື ໃນການຫຼຸດຜ່ອນທາດອາຍເຮືອນແກ້ວລະຫວ່າງປະເທດໃນຈຸດປະສົງອື່ນ. ສະນັ້ນ, ຈຶ່ງຈຳເປັນຕ້ອງມີການປັບບັນຊີໃຫ້ສອດຄ່ອງກັນ ຫຼື ໃນນາມ ITMOs.

An Article 6.4 mitigation contribution unit (MCU) is a type of unit that will be issued under Article 6.4 but is not authorized for use towards NDCs or Other International Mitigation Purposes (such as CORSIA) and is therefore not subject to corresponding adjustments. The MCUs will contribute to the reduction of emission levels in the host country and these units may be used towards – "results-based climate finance, domestic mitigation pricing schemes or domestic price-based measures", although these might not be the only possible uses. The second type of units issued under Article 6.4 are those that have been authorized by the host country for use towards NDCs and/or Other International Mitigation Purposes and will therefore be subject to a corresponding adjustment, or known as Internationally Transferred Mitigation Outcomes (ITMOs).

Mitigation Outcome (MO)

ຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍເຮືອນແກ້ວ

ຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍເຮືອນແກ້ວ (MO) ແມ່ນຜົນໄດ້ຮັບຈາກການຈັດຕັ້ງປະຕິບັດຍຸດທະສາດການຫຼຸດຜ່ອນທາດອາຍເຮືອນແກ້ວ ທີ່ສາມາດຫຼຸດຜ່ອນ ຫຼື ເກັບກັກການປ່ອຍທາດອາຍເຮືອນແກ້ວ. ຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍເຮືອນແກ້ວ (MO) ເປັນຄຳສັບທີ່ໃຊ້ເອີ້ນ ຫົວໜ່ວຍການຫຼຸດຜ່ອນ ແລະ ເກັບກັກທາດອາຍເຮືອນແກ້ວຕ່າງ ໆ ພາຍໃຕ້ສັນຍາປາຣີ. ຄຳວ່າ "ຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍເຮືອນແກ້ວ" (MO) ໃຊ້ແທນຄຳວ່າ "ການຫຼຸດຜ່ອນທາດອາຍເຮືອນແກ້ວ" (ER) ທີ່ນຳໃຊ້ຢູ່ໃນອະນຸສັນຍາກຽວໂຕ ແລະ ກົນໄກການພັດທະນາສະອາດ (CDM). MO 1 ຫົວໜ່ວຍທຽບເທົ່າກັບ ການບອນ 1 ໂຕນ (ຕົວຢ່າງ: 1 MO = 1tCO2eq). ເມື່ອຜົນໄດ້ຮັບຈາກການຫຼຸດຜ່ອນທາດ

ອາຍເຮືອນແກ້ວ ຖືກຖ່າຍໂອນລະຫວ່າງປະເທດພາຍໃຕ້ການດຳເນີນການຮ່ວມມືສາກົນ, MOs ຈະ ກາຍເປັນ ITMOs.

A Mitigation Outcome (MO) is the quantifiable result of implementing mitigation strategies, reflecting the actual reduction or removal of greenhouse gas emissions. Mitigation Outcomes (MO) is the name given to units of emission reductions and removals under the Paris Agreement. The term "mitigation outcome" (MO) replaces the term "emission reduction" (ER) used during the Kyoto Protocol period and associated with the Clean Development Mechanism (CDM). One MO is equivalent to one ton of CO2 equivalent (i.e., 1 MO = 1tCO2eq). When they are transferred internationally under a cooperative approach, MOs become ITMOs.

Mitigation Outcome Purchase Agreement (MOPA)
ສັນຍາວ່າດ້ວຍ ການຊື້-ຂາຍຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍເຮືອນແກ້ວ

ສັນຍາການຊື້-ຂາຍຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍເຮືອນແກ້ວ (MOPA) ໝາຍເຖິງ ສັນຍາ ພາຍໃຕ້ມາດຕາ 6.2 ຂອງສັນຍາປາຣີ ໂດຍໄດ້ກຳນົດເງື່ອນໄຂ ກ່ຽວກັບການຊື້-ຂາຍ ITMO ລະຫວ່າງຜູ້ຊື້ ແລະ ຜູ້ຂາຍ. ຜ່ານມາ, MOPAs ຖືກເອີ້ນວ່າ "ສັນຍາວ່າດ້ວຍການຊື້-ຂາຍ ການຫຼຸດຜ່ອນທາດອາຍເຮືອນແກ້ວ" ຫຼື ຂຽນຫຍໍ້ວ່າ ERPA. MOPAs ມີຄວາມແຕກຕ່າງຈາກ ກອບສັນຍາ (Framework Agreements). ໃນ MOPA ຈະມີຂໍ້ກຳນົດທົ່ວໄປ (ຕົວຢ່າງ: ຂໍ້ກົດນົດ ກ່ຽວກັບການປັບບັນຊີໃຫ້ສອດຄ່ອງກັນ, ການຂຶ້ນທະບຽນ, ການປົກປ້ອງ ແລະ ການອະນຸມັດການ ຖ່າຍໂອນ). ນອກຈາກນີ້, ອາດມີຂໍ້ກຳນົດກ່ຽວກັບ NDC ຂອງປະເທດທີ່ຂາຍສິນເຊື່ອກາກບອນ, ຄວາມສ່ຽງໃນການຂາຍກາກບອນຈຳນວນຫຼາຍເກີນໄປ ແລະ ທາງເລືອກໃນການແກ້ໄຂຄວາມສ່ຽງ ເຫຼົ່ານັ້ນ.

A mitigation Outcome Purchase Agreement (MOPA) is the contractual arrangement under Article 6.2 that describes the terms and conditions around the purchase and sale of ITMOs between two Parties. Previously, MOPAs were referred to as "Emission Reduction Purchase Agreements", or ERPAs. MOPAs are distinct from Framework Agreements. A MOPA will contain general provisions (i.e. provisions on corresponding adjustments, registries, safeguards, and authorization of transfer. It could also include provisions on the host country's NDC, the risk of overselling, and potential options to address those risks.

N



Nationally Determined Contribution (NDC)
ແຜນງານແຫ່ງຊາດການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ

NDCs ແມ່ນແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ຂອງບັນດາປະເທດພາຄີພາຍໃຕ້ສັນຍາປາຣີ ເພື່ອຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ. ບັນດາປະເທດພາຄີມີພັນທະ ຕ້ອງໄດ້ສ້າງ ແລະ ປັບປຸງ NDC ຂອງຕົນ ຕາມຮອບວຽນທຸກ ໆ 5 ປີ ພາຍໃຕ້ມາດຕາ 4 ຂອງສັນຍາປາຣີຊຶ່ງ NDC ແມ່ນ ໄດ້ກຳນົດບັນດາຄາດໝາຍສູ້ຊົນໃນການປະກອບສ່ວນການຫຼຸດຜ່ອນການປ່ອຍທາດອາຍເຮືອນ ແກ້ວ ໃນສອງຮູບແບບ (ແບບບໍ່ມີເງື່ອນໄຂ ແລະ ແບບມີເງື່ອນໄຂ). ສຳລັບລາຍລະອຽດຂອງ NDCs ສາມາດເບິ່ງໄດ້ຢູ່ທີ່ເວັບໄຊຂອງ UNFCCC.

NDCs are national climate action plans to reduce GHG emissions and adapt to climate change impacts. Each Party to the Paris Agreement is required to establish an NDC and update it every five years as per Article 4 of the Paris Agreement. In the Paris Agreement, there is an expectation that NDCs are enhanced: that the targets set are increasingly ambitious. NDCs can be found on the NDC submission portal of the UNFCCC.

Nationally Determined Contribution (NDC) Unconditional Mitigation Targets
ເປົ້າໝາຍການຫຼຸດຜ່ອນແບບບໍ່ມີເງື່ອນໄຂ

ເປົ້າໝາຍການຫຼຸດຜ່ອນແບບບໍ່ມີເງື່ອນໄຂພາຍໃຕ້ NDC ແມ່ນ ການຫຼຸດຜ່ອນທາດອາຍເຮືອນ ແກ້ວ ທີ່ປະເທດໄດ້ໃຫ້ຄຳໝັ້ນສັນຍາທີ່ຈະບັນລຸໃຫ້ໄດ້ດ້ວຍຊັບພະຍາກອນທີ່ມີ ແລະ ການ ສະໜັບສະໜູນຈາກບັນດາປະເທດທີ່ພັດທະນາແລ້ວ. ຕົວຢ່າງ, ສປປ ລາວ ໄດ້ມີການສະໜອງ ງົບປະມານໃຫ້ແກ່ການນຳສະເໜີເຕົາປະຢັດສຳລັບການແຕ່ງກິນທີ່ປະຢັດພະລັງງານຈຳນວນ 50.000 ໜ່ວຍ

Unconditional Mitigation targets under NDC are GHG emission reductions that the country commits to deliver through its own resources and existing support from developed country Parties. [17] For example, Lao PDR has a secure financing for the introduction of 50.000 energy efficient cook stoves.

Nationally Determined Contribution (NDC) Conditional Mitigation Targets

ເປົ້າໝາຍການຫຼຸດຜ່ອນແບບມີເງື່ອນໄຂ

ເປົ້າໝາຍການຫຼຸດຜ່ອນແບບມີເງື່ອນໄຂພາຍໃຕ້ NDC ແມ່ນ ການຫຼຸດຜ່ອນທາດອາຍເຮືອນແກ້ວເພີ່ມເຕີມ ທີ່ປະເທດສາມາດບັນລຸໄດ້ ຖ້າຫາກໄດ້ຮັບການສະໜັບສະໜູນຈາກສາກົນເພີ່ມຂຶ້ນຈາກບັນດາປະເທດທີ່ພັດທະນາແລ້ວ.[13] ໃນນັ້ນລວມມີ ການສະໜັບສະໜູນທາງດ້ານການເງິນ, ການຖ່າຍທອດເຕັກໂນໂລຊີ ແລະ ການສ້າງຄວາມອາດສາມາດ ທີ່ໄດ້ຮັບຈາກກົນໄກຕະຫຼາດພາຍໃຕ້ມາດຕາ 6 ຂອງສັນຍາປາຣີ. ເປົ້າໝາຍແບບມີເງື່ອນໄຂ ໂດຍທົ່ວໄປຈະເນັ້ນໃສ່ບັນດາຂະແໜງການທີ່ມີຕົ້ນທຶນໃນການຫຼຸດຜ່ອນທາດອາຍເຮືອນແກ້ວສູງ ແລະ ປະເທດບໍ່ສາມາດເຂົ້າເຖິງເຕັກໂນໂລຊີໄດ້.

Conditional NDC targets are additional GHG emission reductions that the country could deliver if they were to receive increased levels of international support from developed country Parties. This includes financial, technology transfer and all capacity building support provided through market mechanisms under the Article 6. Conditional targets usually focus on sectors with high-abatement costs and technologies not accessible to the country.

National Inventory Report (NIR)

ບົດລາຍງານການສຳຫຼວດທາດອາຍເຮືອນແກ້ວແຫ່ງຊາດ (NIR)

ບົດລາຍງານການສຳຫຼວດທາດອາຍເຮືອນແກ້ວ ແຫ່ງຊາດ ໝາຍເຖິງ ການສຳຫຼວດທາດອາຍເຮືອນແກ້ວປະຈຳປີ ຊຶ່ງແມ່ນການປະເມີນປະລິມານການປ່ອຍ ແລະ ການເກັບກັກທາດາຍເຮືອນແກ້ວ ຈາກແຫຼ່ງທີ່ມາ ຫຼື ແຫຼ່ງເກັບກັກພາຍໃນໜຶ່ງປີ. ໂດຍຕ້ອງໄດ້ຍື່ນສະເໜີຕໍ່UNFCCC ທຸກປີ. ບົດລາຍງານການສຳຫຼວດທາດອາຍເຮືອນແກ້ວແຫ່ງຊາດ ປະກອບມີເອກະສານການສຳຫຼວດທາດອາຍເຮືອນແກ້ວແຫ່ງຊາດ ແລະ ຕາຕະລາງການລາຍງາຍທົ່ວໄປ.

The National Inventory Report is an annual greenhouse gas (GHG) inventory which is an estimate of emissions and removals of GHGs from sources or sinks in a year, that needs to be submitted to the UNFCCC every year. The national inventory report consists of a national inventory document and the common reporting tables.

Negative list

ລາຍການທີ່ບໍ່ໄດ້ຮັບອະນຸຍາດ

ລາຍການທີ່ບໍ່ໄດ້ ຮັບອະນຸຍາດພາຍໃຕ້ ມາດຕາ 6 ແມ່ນລາຍການຈາກທຸກຂົງເຂດຫຼືກິດຈະກຳ ທີ່ບໍ່ສອດຄ່ອງຕາມເງື່ອນໄຂເພື່ອອະນຸຍາດການໂອນຖ່າຍສິນເຊື່ອກາກບອນພາຍໃຕ້ ມາດຕາ

6 ตามกอบการ่วมมิ. ภิดจะกำเห้าบี้อาดเป้นภิดจะกำภาบพุดผ่อบหาดอายเรือบแก้วที่ยู่ใบเป้าพาย NDC แบบบ่มิเงื่อบไข (เพาะว่าภิดจะกำเห้าบี้ต้องได้ รับภาบจัดตั้งปะติบัดด้วยชับพะยากอบที่มิยู่ของปะเหด) หื ภิดจะกำที่บ่แม่บบูลิมะสิดภาบพัดทะบาของปะเหด.

A negative list in the context of Article 6 is a list of sectors or activities that are ineligible to have carbon credits authorized to be transferred internationally under an Article 6 cooperative approach. This would be defined by the host country and could include mitigation activities included in a country's unconditional NDC (because they need to be delivered with the country's existing resources) or that are not aligned with national development priorities.

Net Zero Emissions
ภาบป่อยหาดอายเรือบแก้วเป้นสูบ

ภาบป่อยหาดอายเรือบแก้วเป้นสูบ พายเถิง ภาบป่อยหาดอายเรือบแก้วทั้งพ็ดที่ถืกป่อยออกมาจากภิดจะกำต่างๆ ของมะบุด ถืกชุ็ดเชียด้วยภิดจะกำที่สามาดถูดชับ และ เก็บภักภาบป่อยดั่งก่าว โดยทำมะชาด หื ภาบเก็บภักหาดอายภาบอบอื่บๆ, เร็ดให้ภาบป่อยหาดอายเรือบแก้วสู่ชั้บบับยาภาดเท่ากับสูบ. เพื่อรักสาบ่ให้โลกร้อบเกิบ1.5 อ็งสาเซ พายใต้สับยาปาริ ได้ธงภร้องให้พุดผ่อบภาบป่อยหาดอายเรือบแก้ว 43% พายใบปี 2030 และ บับลุเป้าพายภาบป่อยหาดอายเรือบแก้วเป้นสูบ พายใบปี 2050. ให้รับรู้ไว้ว่า "ดวาบเป้นกางหางภาบอบ" มิดวาบพายค้ายดีกับกับ "ภาบป่อยหาดอายเรือบแก้วเป้นสูบ" และ ทั้งสองคำแม่บสามาดใช้แทบกับได้ เพาะยังบ่พับมิคำอะทิบายย่างเป้นหางภาบ, เถิงแม่บว่า SBTi จะกำบ็ดมาดตะถาบสำลับภาบป่อยหาดอายภาบอบเป้นสูบกำตาม.

Net zero emissions means when all GHG emissions released by human activities are counterbalanced by activities that can absorb and durably store such emissions by nature or other carbon dioxide removal, leaving zero emissions in the atmosphere. To keep global warming to no more than 1.5°C – as called for in the Paris Agreement – emissions need to be reduced by 43 per cent by 2030 and reach net zero by 2050. Note that 'carbon neutrality' is similar to 'net zero emissions' and the terms are used interchangeably with no agreed global definition, although the SBTi prescribes a standard for net-zero emissions.

Non-permanence
ການບໍ່ຍັນລຸຕາມຄາດໝາຍ

ການບໍ່ຍັນລຸຕາມຄາດໝາຍ ໝາຍເຖິງ ສະຖານະການທີ່ການຫຼຸດຜ່ອນ ຫຼື ເກັບກັກທາດອາຍເຮືອນແກ້ວຈາກກິດຈະກຳໃດໜຶ່ງ ບໍ່ຍັນລຸຕາມຄາດໝາຍທີ່ກຳນົດໄວ້ ຕົວຢ່າງ: ເນື່ອງຈາກໄພພິບັດທາງທຳມະຊາດ, ການບໍລິຫານໂຄງການທີ່ບໍ່ມີປະສິດທິພາບ ຫຼື ການປ່ຽນແປງສະພາບການໃນທ້ອງຖິ່ນ ເຮັດໃຫ້ການເກັບຮັກສາກາກບອນບໍ່ສາມາດປະຕິບັດໄດ້ອີກຕໍ່ໄປ. ຄວາມສ່ຽງຈາກການບໍ່ຍັນລຸຕາມຄາດໝາຍ ອາດມີລະດັບສູງຢູ່ໃນຂະແໜງການປ່າໄມ້ ແລະ ການນຳໃຊ້ທີ່ດິນ ເຊັ່ນ: ໄຟໄໝ້ປ່າ ຫຼື ການທຳລາຍພື້ນທີ່ປ່າໄມ້ ທີ່ອາດເຮັດໃຫ້ມີການປ່ອຍກາກບອນຄືນ ຊຶ່ງໄລຍະຜ່ານມາໄດ້ "ຖືກເກັບກັກ" ແລະ ຮັບຮອງເປັນສິນເຊື່ອໄປແລ້ວ.

Non-permanence refers to a situation in which the emission reductions or removals generated by a mitigation activity are later reversed, for example, due to a natural disaster, project mismanagement, or changes in local conditions that make carbon storage no longer viable. The risk of non-permanence is particularly acute in the forestry and land-use sector where, for example, fires or degradation of forested area may release carbon that has previously been "removed" and credited.

O



Other International Mitigation Purposes (OIMP)
ການຫຼຸດຜ່ອນທາດອາຍເຮືອນແກ້ວລະຫວ່າງປະເທດໃນຈຸດປະສົງອື່ນ

ການຫຼຸດຜ່ອນທາດອາຍເຮືອນແກ້ວລະຫວ່າງປະເທດໃນຈຸດປະສົງອື່ນ ໝາຍເຖິງ ເຫດຜົນຕ່າງ ໆ ສຳລັບ ການນຳໃຊ້ ITMOs ຍົກເວັ້ນ ເພື່ອບັນລຸເປົ້າໝາຍ NDC (ກໍຄື ຈຸດປະສົງອື່ນ ໆ ນອກຈາກ NDC). ໃນນີ້ ປະກອບດ້ວຍຈຸດປະສົງສອງປະເພດຄື: (1) ເພື່ອນຳໃຊ້ພາຍໃຕ້ກົນໄກແບບບັງຄັບຂອງສາກົນ (ປະຈຸບັນ ມີພຽງ ໂຄງການ ການຊົດເຊີຍ ແລະ ການຫຼຸດຜ່ອນ ການປ່ອຍ ສຳລັບການບິນສາກົນ (CORSIA)) ແລະ (2) ເພື່ອຈຸດປະສົງຕ່າງ ໆ ດ້ວຍຄວາມສະໝັກໃຈ (ເບິ່ງ ຕະຫຼາດການປ່ອຍແບບສະໝັກໃຈ). ສຳລັບ ITMOs ນຳໃຊ້ເພື່ອຈຸດປະສົງອື່ນ ໆ ໃນການຫຼຸດຜ່ອນທາດອາຍເຮືອນແກ້ວລະຫວ່າງປະເທດ ແມ່ນຕ້ອງ ມີການປັບບັນຊີໃຫ້ສອດຄ່ອງກັນ ເຊັ່ນດຽວກັນກັບການນຳໃຊ້ ITMOs ໃນ NDC.

Other International Mitigation Purposes refers to all the reasons for which ITMOs may be used except for the achievement of a NDC (i.e. other purposes than the NDC). This includes two broad categories of purposes: (1) for use under international compliance mechanisms (currently only the Carbon Offsetting and Reduction Scheme for International Aviation (CORSIA)) and (2) for voluntary purposes (see the Voluntary carbon market (VCM)). As for ITMOs used against the NDC, ITMOs for Other International Mitigation Purposes require the application of a corresponding adjustment.

Overall Mitigation in Global Emissions (OMGE)
ການຫຼຸດຜ່ອນທາດອາຍເຮືອນແກ້ວຂອງສາກົນ

ການຫຼຸດຜ່ອນທາດອາຍເຮືອນແກ້ວຂອງສາກົນ (OMGE) ໝາຍເຖິງວິທີການໃນການຫຼຸດຜ່ອນທາດ ອາຍເຮືອນແກ້ວໃນລະດັບສາກົນຊຶ່ງບໍ່ໄດ້ນັບປະລິມານຈາກສິນເຊື່ອກ່ອນ ເພື່ອນຳໃຊ້ເຂົ້າໃນຈຸດ ປະສົງສະເພາະໃດໜຶ່ງ. ກົດລະບຽບມາດຕາ 6.4 ຂອງສັນຍາປາຣີ ກຳນົດວ່າ 2% ຂອງຜົນໄດ້ຮັບ A6.4ERs ທີ່ຮັບຮອງພາຍໃຕ້ກົນໄກມາດຕາ 6.4 ຕ້ອງຖືກຍົກເລີກເພື່ອຈຸດປະສົງໃນການປະຕິບັດການ ຫຼຸດຜ່ອນທາດອາຍເຮືອນແກ້ວຂອງສາກົນ (OMGE). ການຍົກເລີກຜົນໄດ້ຮັບ A6.4ERs ບໍ່ສາມາດນຳ ໃຊ້ເພື່ອຈຸດປະສົງອື່ນ. ພາຍໃຕ້ຂໍ້ແນະນຳມາດຕາ 6.2, ການຍົກເລີກດັ່ງກ່າວບໍ່ແມ່ນມາດຕະການບັງຄັບ ແຕ່ກຳ "ຮຽກຮ້ອງ" ໃຫ້ບັນດາປະເທດພາຄີຍົກເລີກສ່ວນໜຶ່ງຂອງ ITMOs ເພື່ອສະໜັບສະໜູນ OMGE, ແຕ່ບໍ່ໄດ້ກຳນົດສັດສ່ວນ ແລະ ໃຫ້ປະເທດພາຄີເປັນຜູ້ກຳນົດເອງ.

Overall Mitigation in Global Emissions (OMGE) involves reducing GHG emissions on a global scale by not counting a certain amount of carbon credits towards any specific use. Under the rules of the Article 6.4 Mechanism, a minimum of 2% of A6.4ERs must be cancelled for the purpose of delivering Overall Mitigation in Global Emissions (OMGE). The cancelled A6.4ERs cannot be used for any other

purpose. Under the Article 6.2 guidance, such cancellation is not mandatory, but countries are "strongly encouraged" to cancel a portion of ITMOs to support delivery of OMGE, but the rate is unspecified and left open to Parties.

Overselling risk
ຄວາມສ່ຽງໃນການຂາຍສິນເຊື່ອການປ່ອຍເກີນກຳນົດ

ຄວາມສ່ຽງໃນການຂາຍສິນເຊື່ອການປ່ອຍເກີນກຳນົດ (ຫຼື ການຖ່າຍໂອນເກີນ) ເປັນຄວາມສ່ຽງໃໝ່ ສຳລັບປະເທດທີ່ຂາຍສິນເຊື່ອການປ່ອຍ (ປະເທດຂາຍ) ໃນການມີສ່ວນຮ່ວມໃນຕະຫຼາດການປ່ອຍ ສາກົນພາຍໃຕ້ສັນຍາປາຣີ. ຄວາມສ່ຽງນີ້ ໝາຍເຖິງ ສະຖານະການທີ່ປະເທດໃດໜຶ່ງອາດຂາຍ ITMOs ເກີນກຳນົດ ແລະ ເຮັດໃຫ້ບໍ່ສາມາດບັນລຸເປົ້າໝາຍການຫຼຸດຜ່ອນທາດອາຍເຮືອນແກ້ວໃນແຜນງານ NDC ຂອງຕົນ.

The risk of overselling (or over-transferring) is a new risk for host (seller) countries engaging in international carbon markets under the Paris Agreement. It refers to the situation in which a country would have oversold ITMOs and would therefore be unable to meet its NDC mitigation targets.

P



Paris agreement
ສັນຍາປາຣີ

ສັນຍາປາຣີ ໝາຍເຖິງ ສັນຍາວ່າດ້ວຍການປ່ຽນແປງດິນຟ້າອາກາດ ທີ່ໄດ້ຖືກຮັບຮອງ ໃນກອງປະຊຸມ ລັດພາຄີສົນທິສັນຍາສະຫະປະຊາຊາດ ວ່າດ້ວຍການປ່ຽນແປງດິນຟ້າອາກາດ ຄັ້ງທີ 21 (UNFCCC).

Paris Agreement means the climate change accord that was adopted at the 21st Session of the Conference of the Parties to the United Nations Framework Convention on Climate Change (UNFCCC).

Positive list
ລາຍການທີ່ໄດ້ຮັບອະນຸຍາດ

ລາຍການທີ່ໄດ້ຮັບອະນຸຍາດ ໝາຍເຖິງລາຍການທີ່ກຳນົດບັນດາກິດຈະກຳຕ່າງ ໆ ທີ່ສອດຄ່ອງກັບ ເງື່ອນໄຂໃນການສ້າງ ITMOs ພາຍໃຕ້ການຮ່ວມມືໃນມາດຕາ 6 ຂອງສັນຍາປາຣີ. ໂດຍທົ່ວໄປ, ລາຍການທີ່ໄດ້ຮັບອະນຸຍາດແມ່ນອີງຕາມເປົ້າໝາຍ NDC ແບບມີເງື່ອນໄຂ ແລະ ກວມເອົາບັນດາ ຂົງເຂດ ທີ່ມີຕົ້ນທຶນການຫຼຸດຜ່ອນທາດອາຍເຮືອນແກ້ວສູງຊຶ່ງມີຄວາມສອດຄ່ອງຕາມບູລິມະສິດການ ພັດທະນາຂອງປະເທດ.

A positive list contains activities that would be eligible to generate ITMOs under Article 6 approaches. Positive lists are usually based on the country's conditional NDC targets and contain high-abatement cost sectors that are aligned to national development priorities.

Project Owner
ເຈົ້າຂອງໂຄງການ

ເຈົ້າຂອງໂຄງການ ໝາຍເຖິງ ຜູ້ດຳເນີນງານ ແລະ ເຈົ້າຂອງພື້ນທີ່ໂຄງການ ກິດຈະກຳການຫຼຸດ ຜ່ອນທາດອາຍເຮືອນແກ້ວຕົວຈິງ. ເພື່ອຮັບຮູ້ວ່າ ເຈົ້າຂອງໂຄງການ ອາດມີຄວາມແຕກຕ່າງ ຫຼື ຄືກັນ ກັບ "ຜູ້ພັດທະນາໂຄງການ" ຊຶ່ງເປັນຜູ້ພັດທະນາກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວ ແລະ "ຜູ້ສະເໜີໂຄງການ" ຊຶ່ງເປັນໜ່ວຍງານທີ່ຮັບຜິດຊອບໃນການຍື່ນສະເໜີ ແລະ ລົງທະບຽນໂຄງການ ສິນເຊື່ອກາກບອນ.

A Project Owner is the operator and owner of the physical project site where the Mitigation Activity takes place. Note this can be different or same as "Project Developers" who develop the Mitigation Activity and "Project Propoponents" who

are the entity responsible for submitting and registering a project with carbon crediting program.

R



REDD+

ການຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ ຈາກການ ທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າເຊື່ອມໂຊມ

"REDD" ແມ່ນຫຍໍ້ມາຈາກ "ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການ ທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າເຊື່ອມໂຊມ ໃນປະເທດທີ່ກຳລັງພັດທະນາ" ສ່ວນ "+" ໝາຍເຖິງກິດຈະກຳອື່ນທີ່ກ່ຽວຂ້ອງກັບການປົກປັກຮັກສາປ່າໄມ້, ກໍຄືການຄຸ້ມຄອງ ແລະ ການອະນຸລັກປ່າງ ຍືນຍົງ ແລະ ການເພີ່ມປະລິມານການເກັບກັກກາກບອນຈາກປ່າໄມ້. ພາຍໃຕ້ກອບແຜນງານ REDD+, ປະເທດກຳລັງພັດທະນາ ຈະໄດ້ຮັບຄ່າຕອບແທນຕາມຜົນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກການຫຼຸດຜ່ອນການທຳລາຍປ່າໄມ້.

'REDD' stands for 'Reducing emissions from deforestation and forest degradation in developing countries. The '+' stands for additional forest-related activities that protect the climate, namely sustainable management of forests and the conservation and enhancement of forest carbon stocks. Under the framework with these REDD+ activities, developing countries can receive results-based payments for emission reductions when they reduce deforestation.

Registry

ການຂຶ້ນທະບຽນ

ການຂຶ້ນທະບຽນກາກບອນ ແມ່ນລະບົບຄຸ້ມຄອງຂໍ້ມູນ ແລະ ຕິດຕາມສິນເຊື່ອກາກບອນ. ພາຍໃຕ້ສັນຍາປາຣີ, ບັນດາປະເທດພາຄີ ມີພັນທະໃນການພັດທະນາ ແລະ ເຂົ້າເຖິງການບັນທຶກ ແລະ ຕິດຕາມການຂຶ້ນທະບຽນ ITMOs ທີ່ເປັນສ່ວນໜຶ່ງຂອງຂະບວນການວັດແທກ, ລາຍງານ ແລະ ຢັ້ງຢືນ. ການຂຶ້ນທະບຽນ ແມ່ນເພື່ອຮັບປະກັນຄວາມໂປ່ງໃສ ໃນການສະໜອງ ກອບການຕິດຕາມຂໍ້ມູນໂຄງການ ລວມທັງການເປັນເຈົ້າຂອງກຳມະສິດສິນເຊື່ອກາກບອນ, ການຮັບຮອງສິນເຊື່ອກາກບອນ, ການເຮັດທຸລະກຳ ແລະ ການສິ້ນສຸດຂອງໂຄງການ ແລະ ເປັນເຄື່ອງມືໃນການເກັບກຳຂໍ້ມູນກ່ຽວກັບໂຄງການຕ່າງ ໆ ທີ່ມີຢູ່. ສຳລັບມາດຕາ 6, UNFCCC ຈະພັດທະນາລະບົບການຂຶ້ນທະບຽນສາກົນ ທີ່ລັດພາຄີສາມາດນຳໃຊ້ໄດ້ ຊຶ່ງການຂຶ້ນທະບຽນນີ້ ສາມາດເຊື່ອມໂຍງກັນກັບການຂຶ້ນທະບຽນກົນໄກພາຍໃຕ້ມາດຕາ 6.4 ຂອງສັນຍາປາຣີ ເພື່ອຕິດຕາມ AR6.4ERs.

A carbon registry is a system used to issue and track carbon credits. Under the Paris Agreement, each Party is obligated to have access to a registry recording and tracking ITMOs as part of the Monitoring, Reporting, and Verification process. Registries ensure transparency by providing a log of all project information as well as credit ownership, credit issuances, transactions, and retirements and are a tool to collect data on existing projects. For Article 6, the UNFCCC is developing

an International Registry which will be available for use by Parties. It is linked to but distinct from the Article 6.4 Mechanism Registry, which will track AR6.4ERs.

Removal
ການເກັບກັກ

ການເກັບກັກ ໝາຍເຖິງ ຂະບວນການເກັບກັກທາດອາຍການກບອນ ຫຼື ທາດອາຍເຮືອນແກ້ວອື່ນ ອອກຈາກຊັ້ນບັນຍາກາດ ແລະ ຖືກເກັບກັກໄວ້ຢ່າງຖາວອນ. ຊຶ່ງສາມາດເກີດຂຶ້ນໄດ້ດ້ວຍວິທີທຳມະຊາດ ເຊັ່ນ: ການປັງປຸງການນຳໃຊ້ທີ່ດິນ ຫຼື ຜ່ານດ້ານເຕັກນິກ ຕົວຢ່າງ ການດັກຈັບການກບອນທີ່ມີຢູ່ໃນອາກາດໂດຍກົງ ແລະ ນຳລົງໃຕ້ດິນເພື່ອເກັບກັກຖາວອນ.

Carbon removal generally represents the process by which carbon dioxide or other greenhouse gases are removed from the atmosphere and locked away permanently. This can happen through natural ways such as by improving soil management or through engineered solutions such as directly capturing existing carbon in the air and injecting it underground for permanent storage.

Reporting
ການລາຍງານທົ່ວໄປ

ການລາຍງານ ເປັນສ່ວນທີ່ສຳຄັນຂອງສັນຍາປາຣີ ພາຍໃຕ້ກອບແຜນການດຳເນີນງານເພື່ອຍົກລະດັບຄວາມໂປ່ງໃສ ທີ່ໄດ້ກຳນົດໃນມາດຕາ 13ຊຶ່ງຖືກຜັນຂະຫຍາຍມາຈາກກອງປະຊຸມລັດພາຄີສົນທິສັນຍາ ວ່າດ້ວຍການປ່ຽນແປງດິນຟ້າອາກາດ ຄັ້ງທີ 26 (COP26) ໂດຍມະຕິກອງປະຊຸມລັດພາຄີ ສັນຍາປາຣີວ່າດ້ວຍການປ່ຽນແປງດິນຟ້າອາກາດ (CMA). ມາດຕາ 6 ທີ່ກຳນົດເງື່ອນໄຂທົ່ວໄປສຳລັບການລາຍງານ ແມ່ນກວມເອົາທັງ ບົດລາຍງານເບື້ອງຕົ້ນ, ບົດລາຍງານປະຈຳປີ ແລະ ບົດລາຍງານປະຈຳແຕ່ລະໄລຍະ;ຊຶ່ງເປັນບົດລາຍງານເພີ່ມເຕີມ ຈາກບົດລາຍດ້ານຄວາມໂປ່ງໃສກ່ຽວກັບການສຳຫຼວດທາດອາຍເຮືອນແກ້ວ ທຸກ ໆ ສອງປີ ຫຼື ບົດລາຍງານການສຳຫຼວດທາດອາຍເຮືອນແກ້ວ. ການປະຕິບັດຕາມຂໍ້ກຳນົດໃນການລາຍງານຈະເລີ່ມເມື່ອລັດພາຄີໄດ້ມີການມອບສິດ ຫຼື ອະນຸຍາດການນຳໃຊ້ ITMOs ຄັ້ງທຳອິດ (ໂດຍອີງຕາມຂໍ້ແນະນຳມາດຕາ 6.2).

Reporting is an essential part of the Paris Agreement under its Enhanced Transparency Framework described in Article 13, which has been expanded since COP 26 by series of CMA Decisions. Article 6-related reporting requirements include the Initial Report, Annual Information, and Regular information; in addition to the Biennial Transparency Reports or National Inventory Reports. Reporting requirements begin when a Party makes its first authorization for the use of ITMOs (according to the Article 6.2 guidance).

Reporting: Article 6 Initial Report
ການລາຍງານ: ບົດລາຍງານເບື້ອງຕົ້ນພາຍໃຕ້ມາດຕາ 6 ຂອງສັນຍາປາຣີ

ບົດລາຍງານເບື້ອງຕົ້ນມາດຕາ 6 ຂອງສັນຍາປາຣີ ປະກອບດ້ວຍຂໍ້ມູນທີ່ກ່ຽວຂ້ອງກັບການປະຕິບັດ ຂໍ້ກຳນົດ ໃນການປະກອບສ່ວນຂອງລັດພາຄີ, ການບັນລຸຄາດໝາຍສູ້ຊຸນ NDC, ຂໍ້ມູນ ITMO, ວິທີ ການສຳລັບການປັບບັນຊີໃຫ້ສອດຄ່ອງກັນ ແລະ ລາຍລະອຽດກ່ຽວກັບການຮ່ວມມື. ບົດລາຍງານ ນີ້ສາມາດສົ່ງກ່ອນການອະນຸມັດ ITMOs ພາຍໃຕ້ແນວທາງການຮ່ວມມື. ແບບພິມບົດລາຍງານ ລວມ ທັງບົດລາຍງານເບື້ອງຕົ້ນທີ່ບັນດາປະເທດອື່ນ ໆ ໄດ້ສົ່ງມາຮອດປະຈຸບັນນີ້ ສາມາດເບິ່ງໄດ້ຢູ່ໃນເວັບໄຊ ຂອງ UNFCCC.

The Article 6 initial report contains information on how the Party fulfils participation requirements, NDC targets, ITMO metrics, methods for corresponding adjustments, and details on the cooperative approach. The report can be submitted no later than the authorization of ITMOs from a cooperative approach. A report template, as well as initial reports submitted to date by other countries, are available on the UNFCCC website.

Reporting: Article 6 Annual Information
ການລາຍງານ: ບົດລາຍງານປະຈຳປີ ພາຍໃຕ້ມາດຕາ 6 ຂອງສັນຍາປາຣີ

ບົດລາຍງານປະຈຳປີ ພາຍໃຕ້ມາດຕາ 6 ຂອງສັນຍາປາຣີ ແມ່ນການລາຍງານຂໍ້ມູນກ່ຽວກັບການ ອະນຸມັດ ໃຫ້ຖ່າຍໂອນ ຜົນໄດ້ຮັບຈາກການຫຼຸດຜ່ອນທາດອາຍເຮືອນແກ້ວທີ່ຖ່າຍໂອນລະຫວ່າງ ປະເທດ (ITMO) ເພື່ອບັນລຸຄາດໝາຍສູ້ຊຸນຕາມແຜນງານ NDCs ແລະ ການຫຼຸດຜ່ອນທາດອາຍ ເຮືອນແກ້ວທີ່ມີຈຸດປະສົງອື່ນ.ນອກຈາກນັ້ນ,ບົດລາຍງານປະຈຳປີຍັງກວມເອົາການລາຍງານການ ຖ່າຍໂອນຄັ້ງທຳອິດ, ການຖ່າຍໂອນຕໍ່, ການຊື້, ການຖືສິດ ແລະ ການຍົກເລີກ; ການນຳໃຊ້ ITMOs ໃນ ແຜນງານ NDCs ແລະ OMGE; ການຍົກເລີກ ITMOs ແບບສະໝັກໃຈ; ແລະ ການຖ່າຍໂອນ ภิกจะกำของปะเทดพาคี. ບົດລາຍງານປະຈຳປີສາມາດສົ່ງໃນຮູບແບບເອເລັກໂຕຣນິກ ໄປຍັງຖານ ຂໍ້ມູນພາຍໃຕ້ມາດຕາ 6 ຂອງສັນຍາປາຣີ ບໍ່ເກີນວັນທີ 15 ເດືອນເມສາ ໃນປີຕໍ່ໄປ.

Annual information reports information on ITMO authorization for NDCs and for other international mitigation purposes; first transfer, transfer, acquisition, holdings and cancellation; use of ITMOs towards NDCs and OMGE; voluntary cancellation of ITMOs; transferring Party for each activity. The annual information is submitted in an agreed electronic format to the Article 6 database no later than 15 April of the following year.

Reporting: Article 6 Regular Information

ການລາຍງານ: ບົດລາຍງານປະຈຳແຕ່ລະໄລຍະ ພາຍໃຕ້ມາດຕາ 6 ຂອງ ສັນຍາປາຣີ

ບົດລາຍງານປະຈຳແຕ່ລະໄລຍະ ພາຍໃຕ້ມາດຕາ 6 ຂອງສັນຍາປາຣີ ແມ່ນຖືກຄັດຕິດເປັນເອກະສານ ຊ້ອນທ້າຍໃນບົດລາຍງານຄວາມໂປ່ງໃສທຸກ ໆ ສອງປີ ຂອງປະເທດເຈົ້າຂອງສົນເຊື່ອກາກບອນເຊິ່ງ ຈະຕ້ອງນຳສົ່ງ ບໍ່ເກີນວັນທີ 31 ເດືອນທັນວາຂອງປີທີ່ກຳນົດໄວ້. ບົດລາຍງານປະຈຳແຕ່ລະໄລຍະ ປະ ກອບດ້ວຍຂໍ້ມູນກ່ຽວກັບການນຳໃຊ້ກົນໄກການປັບບັນຊີໃຫ້ສອດຄ່ອງກັນ ຢູ່ໃນ NDC ເພື່ອສະແດງໃຫ້ ເຫັນເຖິງການປ່ຽນແປງ "ດຸນການປ່ອຍທາດອາຍເຮືອນແກ້ວ"; ຂໍ້ມູນສະເພາະກ່ຽວກັບການຮ່ວມມື ແລະ ພາກສະຫຼຸບເນື້ອໃນຕາມໂຄງຮ່າງ ລວມທັງດຸນການປ່ອຍທາດອາຍເຮືອນແກ້ວ.

Regular information is included as an annex to the host country's biennial transparency report, submitted no later than 31 December of the given year. Regular information reports information on the application of corresponding adjustments to covered NDC GHG inventory to show adjusted "emissions balance"; specific information on each cooperative approach; and a structured summary, including the emissions balance.

S



Share of Proceeds (SOP)
ການແບ່ງປັນຜົນໄດ້ຮັບ

ການແບ່ງປັນຜົນໄດ້ຮັບ (SOP) ແມ່ນການແບ່ງສັດສ່ວນຜົນໄດ້ຮັບຈາກ ITMOs ເພື່ອເປັນງົບປະມານສະໜອງໃຫ້ແກ່ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ. ມາດຕາ 6.4 ຂອງສັນຍາປາຣີກຳນົດກົດລະບຽບກ່ຽວກັບ SOP ໂດຍວາງຈຸດປະສົງເພື່ອ "ຊ່ວຍເຫຼືອບັນດາປະເທດທີ່ກຳລັງພັດທະນາທີ່ມີຄວາມສ່ຽງເປັນພິເສດຕໍ່ຜົນກະທົບທີ່ຮ້າຍແຮງຈາກການປ່ຽນແປງດິນຟ້າອາກາດ ໃຫ້ມີຕົ້ນທຶນໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ". ມາດຕາດັ່ງກ່າວຍັງກຳນົດ SOP ຕ້ອງເປັນຄ່າທຳນຽມຈຳນວນ 5% ຂອງ A6.4ERs ທີ່ໄດ້ຮັບຮອງ ແລະ ໂອນໄປຍັງກອງທຶນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ. ມາດຕາ 6.2 ຂອງສັນຍາປາຣີ ພຽງແຕ່ "ຮຽກຮ້ອງ" ໃຫ້ລັດພາຄີ ແລະ ຄູ່ຮ່ວມມື ປະກອບສ່ວນຊັບພະຍາກອນຕ່າງ ໆ ເຂົ້າໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ແຕ່ບໍ່ໄດ້ກຳນົດຜູ້ຄຸ້ມຄອງ SOP, ຊຶ່ງຕ້ອງໄດ້ມີການຕົກລົງເປັນເອກະພາບ ລະຫວ່າງລັດພາຄີທີ່ກ່ຽວຂ້ອງ.

The Share of Proceeds (SOP) is a levy on ITMOs to finance climate change adaptation. The Article 6.4 guidance sets out rules for SOP stating that its purpose is to "assist developing country Parties that are particularly vulnerable to the adverse effects of climate change to meet the costs of adaptation". The guidance specifies that the SOP shall be a levy of 5 percent of A6.4ERs at issuance, transferred to the Adaptation Fund. Under Article 6.2, participating Parties and stakeholders are only "strongly encouraged" to commit to contribute resources for adaptation, but it is not specified who manages the SOP. This would need to be agreed between the relevant Parties.

Subsidiary Body for Scientific and Technological Advice (SBSTA)
ຄະນະກຳມະການໃຫ້ການແນະນຳດ້ານວິທະຍາສາດ ແລະ ເຕັກໂນໂລຊີ

ຄະນະກຳມະການ ໃຫ້ການແນະນຳດ້ານວິທະຍາສາດ ແລະ ເຕັກໂນໂລຊີ (SBSTA) ເປັນໜຶ່ງໃນສອງຄະນະກຳມະການຖາວອນຂອງ UNFCCC. ຄະນະກຳມະການດັ່ງກ່າວ ສະໜັບສະໜູນການເຮັດວຽກຂອງ COP ແລະ CMA ຜ່ານການໃຫ້ຂໍ້ມູນ ແລະ ຄຳແນະນຳກ່ຽວກັບບັນຫາທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ ທີ່ກ່ຽວຂ້ອງກັບ UNFCCC ແລະ ສັນຍາປາຣີ. ຂົງເຂດວຽກງານທີ່ສຳຄັນສຳລັບ SBSTA ກໍຄື ຜົນກະທົບ, ຄວາມສ່ຽງ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ການສົ່ງເສີມການພັດທະນາ ແລະ ການຖ່າຍໂອນເຕັກໂນໂລຊີທີ່ເປັນມິດກັບສິ່ງແວດລ້ອມ ແລະ ການດຳເນີນວຽກງານທາງດ້ານວິຊາການໃນການປັບປຸງຄຳແນະນຳສຳລັບການກະກຽມ ແລະ ທົບທວນບົດລາຍງານດ້ານວິຊາການ ການສຳຫຼວດທາດອາຍເຮືອນແກ້ວ.

The SBSTA is one of two permanent bodies to the UNFCCC. It supports the work

of the COP and the CMA through the provision of information and advice on scientific and technological matters as they relate to the UNFCCC and the Paris Agreement. Key areas of work for the SBSTA include the impacts, vulnerability, and adaptation to climate change, promoting the development and transfer of environmentally-sound technologies and conducting technical work to improve the guidelines for preparing and reviewing GHG emission inventories.

T



The Article 6.4 Supervisory Body
ຄະນະກຳມະການຄຸ້ມຄອງມາດຕາ 6.4 ຂອງສັນຍາປາຣີ

ຄະນະກຳມະການຄຸ້ມຄອງມາດຕາ 6.4 ຂອງສັນຍາປາຣີ ປະກອບດ້ວຍ 12 ສະມາຊິກຈາກລັດພາຄີສັນຍາປາຣີ ແລະ ມີໜ້າທີ່ໃນການພັດທະນາ ແລະ ຊີ້ນຳຂໍ້ກຳນົດ ແລະ ຂະບວນການທີ່ຈຳເປັນເພື່ອປະຕິບັດກົນໄກຂອງມາດຕາ 6.4. ຊຶ່ງລວມເຖິງການພັດທະນາ ແລະ/ຫຼື ການອະນຸມາດວິທີການ, ການລົງທະບຽນກິດຈະກຳ, ການຮັບຮອງໜ່ວຍງານກວດສອບເອກະລາດ, ແລະ ຄຸ້ມຄອງການລົງທະບຽນພາຍໃຕ້ມາດຕາ 6.4.

The Article 6.4 Supervisory Body is composed of 12 members from Parites to the Paris Agreement and is tasked with developing and supervising the requirements and processes needed to operationalize the Article 6.4 mechanism.4 This includes developing and/or approving methodologies, registering activities, accrediting third-party verification bodies, and managing the Article 6.4 Registry.

Technical Expert Review
ການທົບທວນບົດລາຍງານຂອງຊ່ຽວຊານສາກົນ

ພາຍໃຕ້ກອບແຜນການດຳເນີນງານຍົກລະດັບຄວາມໂປ່ງໃສ ໃນມາດຕາ 13 ຂອງສັນຍາປາຣີກຳນົດໃຫ້ບົດລາຍງານທີ່ລັດພາຄີນຳສົ່ງ ຕ້ອງໄດ້ຜ່ານການທົບທວນ ແລະ ກວດກາ ໂດຍຜູ້ຊ່ຽວຊານສາກົນ (ເບິ່ງການລາຍງານ). ການທົບທວນເບື້ອງຕົ້ນ ໝາຍເຖິງການກວດຜ່ານບັນຊີການປ່ອຍທາດອາຍເຮືອນແກ້ວພາຍໃຕ້ແຜນງານ NDCs ຂອງປະເທດ ແລະ ຂໍ້ມູນອື່ນທີ່ກ່ຽວຂ້ອງກັບບັນຫາທາງດ້ານການເງິນ ແລະ ເຕັກໂນໂລຊີ. ເຖິງຢ່າງໃດກໍຕາມ, ໃນກອງປະຊຸມ COP27, CMA ໄດ້ຕົກລົງກ່ຽວກັບກົດລະບຽບຂອງຊ່ຽວຊານສາກົນ ສຳລັບການທົບທວນບົດລາຍງານໃນມາດຕາ 6.

Under the Enhanced Transparency Framework, Article 13 of the Paris Agreement, information submitted by Parties must be reviewed by technical experts (see Reporting) The review initially was meant to go through national inventories, country NDCs, and other information on financial and technological issues. However, at COP27, the CMA agreed on further rules for the technical expert review of Article 6 reports.

Transferring country
ປະເທດເຈົ້າຂອງສິນເຊື່ອການປ່ອຍ

ປະເທດເຈົ້າຂອງສິນເຊື່ອການປ່ອຍ ໝາຍເຖິງ ປະເທດທີ່ປະຕິບັດກິດຈະກຳຫຼຸດຜ່ອນທາດອາຍເຮືອນແກ້ວທີ່ຖືກຖ່າຍໂອນ. "ການປັບບັນຊີໃຫ້ສອດຄ່ອງກັນ" ຂອງປະເທດນີ້ ແມ່ນຈະເປັນການປັບບັນຊີ ທີ່ໄດ້ລາຍງານການປ່ອຍ ໂດຍການເພີ່ມຈຳນວນ ITMO ທີ່ໄດ້ຖ່າຍໂອນໄປແລ້ວໃສ່ໃນບັນຊີຄືນ. ນອກ

ຈາກນີ້, ປະເທດເຈົ້າຂອງສິນເຊື່ອກາກບອນ ຍັງສາມາດເອີ້ນວ່າເປັນ “ປະເທດຂາຍສິນເຊື່ອກາກບອນ”.

The country that hosts the activity that generates the emissions reductions that are transferred. the “corresponding adjustment” in this country would be to adjust its reported emissions by adding back the amount of the ITMO transfer. Transferring country may also be referred to as “host country” or “seller country”.

V



Validation
ການກວດສອບ

ການກວດສອບ ການເງິນການກຍອນເພື່ອຮັບຮອງ ໝາຍເຖິງ ຂັ້ນຕອນການປະເມີນເອກະສານກ່ຽວ ກັບກິດຈະກຳການຫຼຸດຜ່ອນທາດອາຍເຮືອນແກ້ວ ໂດຍໜ່ວຍງານເອກະລາດ (ເຊັ່ນວ່າ ອົງການ ກວດສອບພາຍນອກ) ເພື່ອຮັບປະກັນຄວາມສອດຄ່ອງກັບກົດລະບຽບ ແລະ ຂໍ້ກຳນົດໃນມາດຕະ ຖານ/ກົນໄກ ແລະ ວິທີການທີ່ກ່ຽວຂ້ອງ. ຂະບວນການນີ້ສາມາດນຳໄປສູ່ການຂຶ້ນທະບຽນກິດຈະກຳ ໂດຍມາດຕະຖານ ຫຼື ບາງຂັ້ນຕອນທີ່ຄ້າຍຄືກັນ ໂດຍປະເທດທີ່ດຳເນີນການປະຕິບັດກິດຈະກຳການຫຼຸດ ຜ່ອນທາດອາຍເຮືອນແກ້ວ.

A validation, in carbon finance, is an independent evaluation of the mitigation activity design documentation by an independent entity (such as an external auditor) against the applicable rules and requirements of the standard/ mechanism and the applicable methodology. This process can lead to the registration of the activity by the standard or some similar step by the country hosting the mitigation activity.

Validation & Verification Bodies
ໜ່ວຍງານກວດສອບ ແລະ ຢັ້ງຢືນ

ໜ່ວຍງານກວດສອບ ແລະ ຢັ້ງຢືນ ແມ່ນໜ່ວຍງານເອກະລາດທີ່ດຳເນີນການປະເມີນ ໂດຍພາກສ່ວນ ທີສາມ ເພື່ອໃຫ້ການຢັ້ງຢືນ ຄວາມສອດຄ່ອງຂອງໂຄງການເປັນໄປຕາມຂໍ້ກຳນົດ ຂອງມາດຕະຖານ ສິນເຊື່ອການກຍອນ ເຊັ່ນ ມາດຕະຖານ VERRA Standard ຫຼື ມາດຕະຖານ Gold Standard.

Validation and Verification Bodies are independent entities who conduct third-party assessments to provide independent confirmation that projects are in line with the requirements of the carbon crediting standards such as VERRA or Gold Standard.

Verification
ການຢັ້ງຢືນ

ການຢັ້ງຢືນການເງິນການກຍອນ ແມ່ນ ຂັ້ນຕອນການປະເມີນກິດຈະກຳການຫຼຸດຜ່ອນທາດອາຍ ເຮືອນແກ້ວ ໂດຍນິຕິບຸກຄົນທີ່ໄດ້ຮັບອະນຸຍາດ ຊຶ່ງການຢັ້ງຢືນດັ່ງກ່າວ ແມ່ນໄດ້ກຳນົດການຫຼຸດຜ່ອນ ການປ່ອຍ ຫຼື ການເກັບກັກທາດອາຍເຮືອນແກ້ວ ທີ່ເກີດຂຶ້ນ ຈາກກິດຈະກຳໂຄງການ ທີ່ໄດ້ຂຶ້ນທະ ບຽນແລ້ວ.

In carbon finance, a verification is the periodic independent evaluation of a mitigation activity by an accredited entity and the determination of emission reductions or removals that have occurred as a result of the registered project activity.

VERRA
ມາດຕະຖານເວຣາ

ເວຣາ (Verra) ໝາຍເຖິງ ມາດຕະຖານສາກົນໃນການຢັ້ງຢືນສິນເຊື່ອກາກບອນ ຈາກປະລິມານ ການຫຼຸດຜ່ອນທາດອາຍເຮືອນແກ້ວ ຊຶ່ງຖືກນຳໃຊ້ສຳລັບຕະຫຼາດກາກບອນແບບສະໝັກໃຈ.

Verra means an international certification standard for carbon credits that focuses on the quantification and verification of greenhouse gas emission reductions. It is utilized in the voluntary carbon market.

Voluntary carbon market (VCM)
ຕະຫຼາດກາກບອນແບບສະໝັກໃຈ

ການຊື້-ຂາຍ ສິນເຊື່ອກາກບອນແບບສະໝັກໃຈ ແມ່ນ ການຊື້-ຂາຍ ສິນເຊື່ອກາກບອນ ໂດຍກົງ ແຕ່ຕ້ອງ ປະຕິບັດຕາມມາດຕະຖານການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຂອງສາກົນ.

ບັນດາຕະຫຼາດເຫຼົ່ານີ້ ຖືກພິຈາລະນາເປັນຕະຫຼາດ “ແບບສະໝັກໃຈ” ຍ້ອນວ່າການຊື້ຂາຍນັ້ນ ບໍ່ໄດ້ຖືກກຳນົດເປັນຂໍ້ບັງຄັບທາງດ້ານກົດໝາຍ ເຊັ່ນ: ອົງກອນທີ່ຫຼຸດຜ່ອນການປ່ອຍທາດອາຍ ເຮືອນແກ້ວສາມາດຂາຍສິນເຊື່ອກາກບອນຂອງຕົນຊຶ່ງອົງກອນອື່ນສາມາດຊື້ ເພື່ອນຳໃຊ້ເຂົ້າ ໃນການບັນລຸເປົ້າໝາຍການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວໃຫ້ເປັນສູນ ຫຼື ນຳໄປຂາຍ ຕໍ່. ອົງການ ການເງິນສາກົນ (IFC) ໄດ້ກ່າວເຖິງ 4 ມາດຕະຖານການຂຶ້ນທະບຽນທີ່ນິຍົມໃຊ້ ຫຼາຍທີ່ສຸດ ສຳລັບຕະຫຼາດກາກບອນແບບສະໝັກໃຈ ໄດ້ແກ່: ມາດຕະຖານການຢັ້ງຢືນກາກບອນ ຂອງອົງການ Verra (ມາດຕະຖານ Verified Carbon Standard), ມາດຕະຖານ Gold Standard, ມາດຕະຖານ Climate Action Reserve ແລະ ມາດຕະຖານ American Carbon Registry.

Voluntary carbon credit trading refers to direct agreements for the buying and selling of carbon credits, which must comply with established international carbon standards.

These markets are considered “voluntary” because the trades made there are not required under a law: agents that reduce their emissions can sell credits, which

other agents can buy for their net-zero pledges or for further trading, for instance. The IFC mentions that the top 4 voluntary registries are Verra's Verified Carbon Standard, Gold Standard, the Climate Action Reserve, and the American Carbon Registry.

REFERENCES: ເອກະສານອ້າງອີງ

1. World Bank (2023) What you need to know about abatement costs and decarbonization: https://www.worldbank.org/en/news/feature/2023/04/20/what-you-need-to-know-about-abatement-costs-and decarbonisation#:~:text=The%20abatement%20cost%20is%20simply,reduce%20their%20greenhouse%20gas%20emissions

2. Forbes (2021) The Concept of Additionality in the Voluntary Carbon Market, Explained: https://www.forbes.com/sites/forbesnonprofitcouncil/2021/10/01/the-concept-of-additionality-in-the-voluntary-carbon-market-explained/?sh=48aa68fa78ec

3. UNFCCC. Decision 3/CMA.3 "Rules, modalities and procedures for the mechanism established by Article 6, paragraph 4, of the Paris Agreement", para 40: https://unfccc.int/sites/default/files/resource/cma2021_10_add1_adv.pdf#page=25

4. UNFCCC (2023) Unlocking Climate Ambition: the Significant of Article 6 at COP28: https://unfccc.int/news/unlocking-climate-ambition-the-significance-of-article-6-at-cop28

5. UNFCCC, Biennial Transparency Reports: Biennial Transparency Reports | UNFCCC

6. International Civil Aviation Organization (ICAO) (2019) CORSIA Emissions Unit Eligibility Criteria: https://www.icao.int/environmental-protection/CORSIA/Documents/ICAO_Document_09.pdf

7. World Bank. What is carbon pricing: https://carbonpricingdashboard.worldbank.org/what-carbon-pricing

8. UNFCCC. Welcome to the centralized accounting and reporting platform (CARP): https://unfccc.int/process-and-meetings/the-paris-agreement/the-paris-agreement/cooperative-implementation/centralized-accounting-and-

reporting-platform

9. UNFCCC. The Clean Development Mechanism: https://unfccc.int/process-and-meetings/the-kyoto-protocol/mechanisms-under-the-kyoto-protocol/the-clean-development-mechanism

10. Gold Standard (2024) Glossary Article 6 of the Paris Agreement: https://goldstandard.cdn.prismic.io/goldstandard/80c9417b-9c93-43ae-bf58-24bbfa5355f6_glossary_-_article_6_of_the_paris_agreement.pdf

11. ICVCM. Leading the way to high integrity in the Voluntary Carbon Market: https://icvcm.org/

12. Ministry of Foreign Affairs of Japan. Joint Crediting Mechanism (JCM): https://www.mofa.go.jp/ic/ch/page1we_000105.html

13. GGGI. Mitigation Outcome Purchase Agreements (2023): https://gggi.org/wp-content/uploads/2023/05/GGGI_Tech_Guidelines_7-1.pdf

14. Nationally Determined Contribution, Lao PDR (2021): https://unfccc.int/sites/default/files/NDC/2022-06/NDC%202020%20of%20Lao%20PDR%20%28English%29%2C%2009%20April%202021%20%281%29.pdf

15. Nationally Determined Contribution, Lao PDR (2021): https://unfccc.int/sites/default/files/NDC/2022-06/NDC%202020%20of%20Lao%20PDR%20%28English%29%2C%2009%20April%202021%20%281%29.pdf

16. UNFCCC (2024). National Inventory Submission: https://unfccc.int/ghg-inventories-annex-i-parties/2024

17. UNFCCC. What is REDD+ https://unfccc.int/topics/land-use/workstreams/redd/what-is-redd

18. UNFCCC, Centralized Accounting and Reporting Platform (interim solution): https://unfccc.int/process-and-meetings/the-paris-agreement/the-paris-agreement/cooperative-implementation/centralized-accounting-

and-reporting-platform.

19. UNFCCC Decision 2/CMA.3, para. 20: https://unfccc.int/sites/default/files/resource/cma2021_10_add1_adv.pdf#page=11

20. UNFCCC Decision 2/CMA.3, para. 21-23: https://unfccc.int/sites/default/files/resource/cma2021_10_add1_adv.pdf#page=11

ສະໜັບສະໜູນໂດຍ:

Australian Aid

ຈັດຕັ້ງປະຕິບັດໂດຍ:



GGGI